# ສຶກສາ ສາເຫດທີ່ມີຜົນກະທົບຕໍ່ການຂາດຮຽນຂອງນັກຮຽນ ຊັ້ນມັດທະຍົມສຶກສາ ຕອນຕົ້ນ ນະຄອນປາກເຊ ແຂວງຈຳປາສັກ

*ສົມສະໜຸກ ຂາວພະຈັນ[1] ຂັນທະລີ ພົມມະເສນ[2], ສີສະໄໝ ດວງມະນີ[3], ສະເຫຼີມໄຊ ແກ້ວກະເສີມສຸກ[4]*

## ບົດຄັດຫຍໍ້

ການສຶກສາຄົ້ນຄວ້າຄັ້ງນີ້ແມ່ນມີຈຸດປະສົງ ເພື່ອສຶກສາ ສາເຫດທີ່ມີຜົນຕໍ່ການຂາດຮຽນຂອງນັກຮຽນ ຢູ່ໂຮງຮຽນມັດທະຍົມສຶກສາ ຕອນຕົ້ນ ທີ່ຂຶ້ນກັບຫ້ອງການສຶກສາທິການ ແລະ ກິລາ ນະຄອນປາກເຊ ແຂວງຈຳປາສັກ. ກຸ່ມປະຊາກອນໃນການສຶກສາແມ່ນ ນັກຮຽນ, ຄູສອນ ແລະ ຜູ້ອຳນວຍການ ໃນໂຮງຮຽນມັດທະຍົມຕອນຕົ້ນ ຈາກ 10 ແຫ່ງທີ່ຂຶ້ນກັບຫ້ອງການສຶກສາທິການ ແລະ ກິລາ ນະຄອນປາກເຊ ແລະ ກຸ່ມຕົວຢ່າງແມ່ນ ນັກຮຽນຈຳນວນ 332 ຄົນ, ຄູສອນຈຳນວນ 120 ທ່ານ ແລະ ຜູ້ອຳນວຍການຈຳນວນ 10 ທ່ານ. ຊຶ່ງໄດ້ເລືອກເອົາ ຈາກແຕ່ລະໂຮງຮຽນເພື່ອເປັນຕົວແທນໃນການສຶກສາຄັ້ງນີ້. ໂດຍຈຳແນກຕາມເພດ, ອາຍຸ, ວຸດທິການສຶກສາ, ປະສົບການເຮັດວຽກ ແລະ ໜ້າທີ່ຕຳແໜ່ງ. ເຄື່ອງມືທີ່ໃຊ້ໃນການສຶກສາຄັ້ງນີ້ ແມ່ນ ແບບສອບຖາມ ແລະ ແບບສຳພາດ, ແບບສອບຖາມປະກອບໄປດ້ວຍຄຳຖາມ 8 ດ້ານ ທີ່ເປັນບັນຫາໃນການຂາດຮຽນຂອງນັກຮຽນ ເຊັ່ນ: ດ້ານຄອບຄົວ, ດ້ານຜູ້ຮຽນ, ດ້ານສະຖານການສຶກສາ, ດ້ານຫຼັກສູດ ແລະ ການຮຽນ-ການສອນ, ດ້ານລະບຽບວິໄນຂອງສະຖານສຶກສາ, ດ້ານຄູສອນ, ດ້ານໝູ່ເພື່ອນ ແລະ ດ້ານສະພາບແວດລ້ອມ ແລະ ສັງຄົມ. ນອກຈາກນີ້, ຍັງມີການສຳພາດຜູ້ອຳນວຍການຈຳນວນ 10 ທ່ານ ຊຶ່ງແມ່ນຕົວແທນຈາກແຕ່ລະໂຮງຮຽນທີ່ຖືກເລືອກ ແລະ ໄດ້ຖືກສຳພາດຄວາມຄິດເຫັນກ່ຽວກັບບັນຫາ ແລະ ວິທີແກ້ໄຂໃນແຕ່ລະດ້ານທີ່ເປັນບັນຫາຕໍ່ການຂາດຮຽນຂອງນັກຮຽນ. ການວິເຄາະຂໍ້ມູນໂດຍການຊອກຫາ ຄ່າຄວາມຖີ່, ເປີເຊັນ, ຄ່າສະເລ່ຍ ແລະ ຄ່າບ່ຽງເບນມາດຕະຖານ.

ຜົນຂອງການຄົ້ນຄວ້າແມ່ນໄດ້ຮັບຮູ້ກ່ຽວກັບສາເຫດທີ່ມີຜົນຕໍ່ການຂາດຮຽນຂອງນັກຮຽນໃນແຕ່ລະດ້ານທີ່ໄດ້ກຳນົດໄວ້ໃນຈຸດປະສົງ ໂດຍລວມແລ້ວແມ່ນຢູ່ໃນລະດັບຫຼາຍ ເຊິ່ງມີ ($\bar{X}$ =2.15). ແຕ່ເມື່ອພິຈາລະນາຕາມລຳດັບແຕ່ລະດ້ານ ພົບວ່າ ດ້ານທີ່ມີສາເຫດຫຼາຍກວ່າໝູ່ແມ່ນ ດ້ານສະຖານການສຶກສາ ທີມີ ($\bar{X}$ =1.92), ຮອງລົງມາແມ່ນ ດ້ານສະພາບແວດລ້ອມ ແລະ ສັງຄົມ ເຊິ່ງມີ ($\bar{X}$ =1.94), ຖັດມາແມ່ນ ດ້ານຜູ້ຮຽນ ເຊິ່ງມີ($\bar{X}$ =1.96), ຕໍ່ມາແມ່ນ ດ້ານຫຼັກສູດການຮຽນ-ການສອນ ເຊິ່ງມີ ($\bar{X}$ =1.98), ດ້ານຄູສອນ ເຊິ່ງມີ ($\bar{X}$ =1.99) ແລະ ດ້ານລະບຽບວິໄນຂອງສະຖານການສຶກສາ ເຊິ່ງມີ ($\bar{X}$ =2.06). ດ້ານທີ່ມີສາເຫດຢູ່ໃນລະດັບປານກາງແມ່ນ ດ້ານຄອບຄົວ ເຊິ່ງມີ ($\bar{X}$ =2.64) ແລະ ດ້ານໝູ່ເພືອນ ເຊິ່ງມີ ($\bar{X}$ = 2.72).

ແນວທາງວິທີການແກ້ໄຂສາເຫດດັ່ງກ່າວໂດຍສະເພາະດ້ານສະຖານການສຶກສາ ແລະ ດ້ານສະພາບແວດລ້ອມ ແລະ ສັງຄົມ ຜົນການຄົ້ນຄວ້າແມ່ນເປັນສາເຫດຫຼັກທີ່ມີຜົນຕໍ່ການຂາດຮຽນຂອງນັກຮຽນຢູ່ໃນລະດັບຫຼາຍ. ຜົນໄດ້ຮັບຈາກການສຶກສາຄົ້ນຄວ້າຄັ້ງນີ້ແມ່ນເປັນປະໂຫຍດສຳລັບຜູ້ບໍລິຫານການສຶກສາ ເພື່ອນຳເອົາເປັນແນວທາງໃນການແກ້ໄຂ

[1] *ສາຂາວິທະຍາສາດການສຶກສາ, ຄະນະສຶກສາສາດ, ມະຫາວິທະຍາໄລ ຈຳປາສັກ*

[2] *ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ*

[3] *ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ*

[4] *ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ*

ແລະ ພັດທະນາສະຖານການສຶກສາ ເວົ້າສະເພາະ ກໍ່ຄືການພັດທະນາຊັບພະຍາກອນມະນຸດໃນສະຖາບັນຂອງຕົນເອງໃຫ້ມີການພັດທະນາຂຶ້ນເປັນກ້າວໆ.

**ຄໍາສັບສໍາຄັນ:** ສຶກສາ ສາເຫດທີ່ມີຜົນກະທົບຕໍ່ການຂາດຮຽນຂອງນັກຮຽນ ຊັ້ນມັດທະຍົມສຶກສາ ຕອນຕົ້ນ

# Study the Causes Affecting Absenteeism of Students at Lower Secondary School in Pakse Distict Champassack Province

**Abstract**

This research study aims to study the causes that affect the absence of students at the primary secondary school that depends on the Department of Education and Sports, Pakse City, Champasak Province. The population group in the study are students, teachers and principals in 10 junior high schools that depend on the Department of Education and Sports in Pakse and the sample group is 332 students, 120 teachers and 10 principals. which was selected from each school to represent in this study. By distinguishing by gender, age, education, work experience and job title. The tools used in this study are questionnaires and interviews. The questionnaires contain 8 questions that are a problem in students' absenteeism, such as family, students, educational institutions, curriculum and teaching, educational institutions, teachers, friends, environment and society. In addition, there were interviews with 10 principals who are representatives from each selected school and were interviewed for their opinions on problems and solutions in each aspect that is a problem for students' absenteeism. Analyze data by finding frequency, percentage, mean and standard deviation values.

The results of the research are known about the causes that affect the absence of students in each of the areas defined in the objectives. Overall, it is at a very high level with ($\bar{X}$=2.15). But when considering the order of each aspect, it is found that the aspect with the most causes is the educational facility with ($\bar{X}$=1.92), followed by the environment and society with ($\bar{X}$=1.94), followed by the student aspect with ($\bar{X}$=1.96), then the curriculum aspect with ($\bar{X}$=1.98), teachers with ($\bar{X}$=1.99) and discipline of the educational institution with ($\bar{X}$=2.06). Factors with medium level of causes are family factors with ($\bar{X}$=2.64) and family factors with ($\bar{X}$= 2.72).

The way to solve this cause, especially in terms of educational facilities and environment and society. The research results are the main causes that affect the absence of students at many levels. The results of this research study are useful for education administrators to take as a way to improve and develop educational institutions, specifically, as well as the development of human resources in their own institutions to develop gradually.

**Keywords:** Study the Causes Affecting Absenteeism of Students at Lower Secondary School

**1. ພາກສະເໜີ**

ການສຶກສາ ການຮຽນຮູ້ນັ້ນ ແມ່ນມີຄວາມສໍາຄັນຕໍ່ຄົນເຮົາຕັ້ງແຕ່ອາດີດຈົນເຖິງປັດຈຸບັນ ເພາະວ່າເມື່ອຄົນເກີດມີການຮຽນຮູ້ຂຶ້ນມານັ້ນ ຄົນເຮົາກໍ່ໄດ້ນໍາສິ່ງທີ່ໄດ້ຮຽນຮູ້ນັ້ນມາກາຍເປັນອີງຂອງຄວາມຮູ້ທີ່ສາມມາດສ້າງສັນສິ່ງຕ່າງໆ ອອກມາເປັນຮູບປະທໍາ ເຊັ່ນ: ສິ່ງກໍ່ສ້າງສັງຄົມ ອະລິຍະທໍາຕ່າງໆ ເຮັດໃຫ້ຄົນເຮົານັ້ນມີຊີວິດຢູ່ເທິງໜ້າໂລກນີ້ໄດ້ຢ່າງສະດວກສະບາຍ ແລະ ມີລະບຽບແບບແຜນ ຍິ່ງອີງຄວາມຮູ້ພັດທະນາກ້າວໄກຫຼາຍຂຶ້ນ ກໍ່ສາມາດເຮັດໃຫ້ແນວຄວາມຄິດຂອງຄົນເຮົານັ້ນມີການພັດທະນາໄປເລື້ອຍໆ ແຕ່ການທີ່ຄົນເຮົາຈະສາມາດຮຽນຮູ້ພັດທະນາ ສ້າງສັນ ສິ່ງຕ່າງໆຂຶ້ນມາໄດ້ນັ້ນຕ້ອງອາໄສອີງປະກອບຫຼາຍຢ່າງເຂົ້າມາຊ່ວຍເພີ່ມຍູ້ດັນໃຫ້ເກີດແຮງຈູງໃຈ ບໍ່ວ່າຈະເປັນຈິດໃຈຊອກຮູ້ບັນຫາທີ່ເກີດຂຶ້ນຈິນຕະນາການ ຄວາມເຊື່ອ ລວມໄປເຖິງທັດສະນະຄະຕິເບິ່ງໄປແລ້ວແມ່ນມີຄວາມສໍາຄັນຢ່າງຫຼວງຫຼາຍຕໍ່ການສ້າງສັນ ການຮຽນຮູ້ຂອງຄົນເຮົາ ເພາະເມື່ອຄົນເຮົາມີທັດສະນະຄະຕິທີ່ດີຕໍ່ສິ່ງໃດສິ່ງໜຶ່ງແລ້ວກໍ່ສາມາດໃຊ້ເປັນຈຸດເລີ່ມຕົ້ນ ໃນການຄົ້ນຄວ້າ ຄວາມສົນໃຈທີ່ນໍາໄປສູ່ການສ້າງສັນສິ່ງດີໆໃຫ້ກັບຕົນເອງ ຄອບຄົວ ສັງຄົມ ແລະ ປະເທດຊາດ. ໃນທາງກົງກັນຂ້າມຖ້າຫາກວ່າຄົນເຮົາມີທັດສະນະຄະຕິຕໍ່ສິ່ງໃດສິ່ງ ໜຶ່ງ ໃນດ້ານລົບແລ້ວ ຄົນເຮົາກໍ່ຈະເປັນຜູ້ທໍາລາຍ ສິ່ງຕ່າງໆຈາກທັດສະນະຄະຕິ ແລະ ຄວາມເຊື່ອຂອງຕົນເອງ ໂດຍຂະຫຍາຍທັດສະນະຄະຕິຄວາມເຊື່ອມໄປສູ່ກຸ່ມບຸກຄົນທີ່ຄ້ອຍຕາມ ອັນນໍາໄປສູ່ການສູນເສຍຂອງສິ່ງຕ່າງໆໃນອະນາຄົດໄດ້. ເພາະສະນັ້ນຈະເຫັນໄດ້ວ່າ ການທີ່ນັກຮຽນ-ນັກສຶກສາຈະສາມາດຮຽນຈົບຈົບການສຶກສາໄດ້ນັ້ນຈະຕ້ອງໄດ້ອາໄສບຸກຄົນຫຼາຍຄົນທີ່ກ່ຽວຂ້ອງກັບການສຶກສາ ໂດຍສະເພາະ ແມ່ນຄູບາອາຈານ ຜູ້ປົກຄອງ ໝູ່ຮ່ວມຊັ້ນຮຽນດຽວກັນ ສັງຄົມທີ່ຢູ່ອາໄສຕະຫຼອດຈົນເຖິງຕົວຂອງນັກຮຽນ-ນັກສຶກສາເອງທີ່ຈະຕ້ອງໄດ້ໃຫ້ຄວາມຮ່ວມມືໃນການສຶກສາໃຫ້ສໍາເລັດລຸລ່ວງໄປດ້ວຍດີ ໃນການດູແລເບິ່ງແຍງນັກສຶກສາແມ່ນ ໜ້າທີ່ຂອງບຸກຄົນຫຼາຍຝ່າຍທີ່ຈະຕ້ອງໄດ້ຊ່ວຍກັນຊອກຫາແນວທາງໃນການແກ້ໄຂບັນຫາກ່ຽວກັບພຶດຕິກໍາຂອງນັກຮຽນໃນລະຫວ່າງການຮຽນ ເປັນຕົ້ນແມ່ນ ການຂາດຮຽນຂອງນັກຮຽນ ກໍ່ອາດຈະສົ່ງຜົນກະທົບຕໍ່ນັກຮຽນ ໃນຂະບວນການຮຽນຮູ້ການສອນ ແລະ ສົ່ງຜົນກະທົບເຖິງຜູ້ປົກຄອງ ຄູ-ອາຈານພາຍໃນໂຮງຮຽນ ສົ່ງຜົນກະທົບຕໍ່ສັງຄົມ ແລະ ເກີດບັນຫາອື່ນໆຕາມມາໄດ້ໃນພາຍຫຼັງ ໄດ້ແກ່: ບັນຫາຢາເສບຕິດ, ກຸ່ມແກ໋ງອັດຕະພານ, ມົ້ວສຸມສິ່ງບໍ່ດີ, ການຕິດເກມ ແລະ ບັນຫາການທີ່ປະພຶດແຂງກະດ້າງເປັນຕົ້ນ ( ສຸພາບ ກາລະປລູກ , 2011 )

ຈາກວິໄສທັດການພັດທະນາການສຶກສາລັດຖະບານໄດ້ວາງຍຸດທະສາດ ວ່າດ້ວຍ ການພັດທະນາຊັບພະຍາ ກອນມະນຸດ ເຊິ່ງໄດ້ອອກຂໍ້ກໍານົດ (ຂໍ້3) ຂອງວຽກງານຈຸດສຸມຄື: ປັບປຸງ ແລະ ປະຕິຮູບການສຶກສາເນັ້ນໃສ່ການປັບປຸງຫຼັກສູດການຮຽນ-ການສອນ, ການພັດທະນາສີມືແຮງງານຂອງຜູ້ປະກອບການ, ຂະແໜງເສດຖະກິດຕ່າງໆ ແລະ ສະຖາບັນການສຶກສາໃນພາກພື້ນ, ສະໜອງພື້ນຖານໂຄງລ່າງທີ່ຈໍາເປັນເພື່ອຮັບໃຊ້ການຮຽນ-ການສອນ, ຂະຫຍາຍອັດຕາການປົກຄຸມຂອງຕາໜ່າງການສຶກສາ ແລະ ການພັດທະນາສີມືແຮງງານ ໂດຍເລັ່ງໃສ່ໄວໜຸ່ມ, ແມ່ຍິງ ແລະ ປະຊຊສຊົນບັນດາເຜົ່າຜູ້ດ້ອຍໂອກາດ ແລະ ຂະຫຍາຍການສຶກສາຂອງເດັກກ່ອນໄວຮຽນໃຫ້ກວ້າງຂວາງ ແລະ ມີປະສິດທິພາບສູງ, ເອົາໃຈໃສ່ພິເສດໃນການລົງທຶນໃສ່ເດັກນ້ອຍຜູ້ດ້ອຍໂອກາດຢູ່ຊົນນະບົດ ແລະ ເດັກນ້ອຍທີ່ມີພອນສະຫວັນຈາກກຸ່ມປະຊາກອນທີ່ດ້ອຍໂອກາດ.(ກະຊວງສຶກສາທິການ ແລະ ກິລາ: ວິໄວທັດການພັດທະນາການສຶກສາ ແລະ ກິລາ ຮອດປີ 2030 ແລະ ຍຸດທະສາດ ປີ 2025 ແລະ ແຜນພັດທະນາຂະປໜງການສຶກສາ ແລະ ກິລາ 5

ປີ ຄັ້ງທີ 8 (2016-2020) ນະຄອນຫຼວງວຽງຈັນ: 2015).

ໃນປັດຈຸບັນນີ້ ນັກຮຽນຈຳນວນສ່ວນຫຼວງຫຼາຍ ມັກຈະຂາດຮຽນ ສາເຫດຂອງການຂາດຮຽນມີຫຼາຍບັນຫາ ແລະ ຫຼາຍສິ່ງຫຼາຍຢ່າງທີ່ຈະສາມາດເກີດຂຶ້ນທັງພາຍໃນ ແລະ ພາຍນອກໂຮງຮຽນ ການຂາດຮຽນສາມາດມີພື້ນຖານມາຈາກແຮງຈູງໃຈ ເຊິ່ງນັກຮຽນອາດບໍ່ສາມາດເຂົ້າຮ່ວມຮຽນໄດ້ ການຂາດຮຽນເຫຼົ່ານີ້ເປັນການຕັດສິນໃຈໂດຍສະໝັກໃຈ ແລະ ໂດຍເຈດຕະຂອງຕົວນັກຮຽນເອງ. ໃນຂະນະທີ່ການຂາດຮຽນອື່ນໆເປັນໄປຕາມໂຄງສ້າງ ເຊິ່ງນັກຮຽນຂາດຮຽນເນື່ອງຈາກສະພາບຊີວິດການເປັນຢູ່ (ເຊັ່ນ ການຍົກຍ້າຍທີ່ຢູ່ອາໄສ) ແລະ ຢູ່ນອກ ເໜືອຈາກການຄວບຄຸມຂອງນັກຮຽນ ແລະ ເປັນການຕັດສິນໃຈໂດຍທີ່ບໍ່ສະໝັກໃຈ. ການຂາດຮຽນຂອງນັກຮຽນມັກຈະເລີ່ມຕົ້ນໃນໂຮງຮຽນ ຊັ້ນປະຖົມສຶກສາ ແຕ່ການຂາດຮຽນສ່ວນໃຫຍ່ຈະເກີດຂຶ້ນເມື່ອເປັນເຍົາວະຊົນທີ່ຮຽນຢູ່ຊັ້ນມັດທະຍົມສຶກສາດ້ວຍເຫດຜົນທີ່ວ່ານັກຮຽນມີອິດສະຫຼະໃນການຕັດສິນໃຈມາຮຽນ ຫຼື ບໍ່ (Henry, 2007). ເຊັ່ນດຽວກັນກັບສາເຫດອື່ນໆ ຜົນທີ່ໄດ້ຮັບຕາມມາຂອງການຂາດຮຽນນັ້ນຂ້ອນຂ້າງຫຼາກຫຼາຍ ແລະ ອາດລວມເຖິງ ຜົນການຮຽນທີ່ທົດຖອຍ ການພັກຮຽນ ຫຼື ອາດຈະຖືກໄລ່ອອກໂຮງຮຽນ ແລະ ການອອກໂຮງຮຽນ(Bazemore, Stinchcombe & Leipzig, 2004). ເນື່ອງຈາກຜົນກະທົບທີ່ຮ້າຍແຮງຈາກການຂາດຮຽນນັກຄົ້ນຄວ້າດ້ານການສຶກສາ ແລະ ຜູ້ກຳນົດນະໂຍບາຍໄດ້ແນະນຳວິທີແກ້ໄຂບັນຫາຈຳນວນໜຶ່ງທີ່ມີຈຸດປະສົງເພື່ອຄວາມຮັບຜິດຊອບທີ່ຮັດກຸມຂຶ້ນ, ມີຄວາມຮ່ວມມືກັບຜູ້ປົກຄອງ ແລະ ນັກຮຽນທີ່ມັກຂາດຮຽນຢ່າງມີລະບຽບວິໄນຂຶ້ນຕື່ມ (Bazemore et al. 2004)

ບັນຫາການຂາດຮຽນ ເປັນບັນຫາທີ່ເກີດຈາກພຶດຕິກຳຂອງນັກຮຽນທີ່ເກີດຂຶ້ນຕັ້ງແຕ່ອາດີດຈົນມາເຖິງຍຸກປັດຈຸບັນທີ່ເກີດຂຶ້ນໃນຊັ້ນຮຽນ ຫຼື ໃນໂຮງຮຽນ ຊຶ່ງຈະພົບເຫັນວ່າເປັນບັນຫາທີ່ເກີດຂຶ້ນສະເພາະບຸກຄົນເທົ່ານັ້ນ ຕໍ່ກັບບັນຫາດັ່ງກ່າວນີ້ຄວນຕ້ອງໄດ້ມີວິທີການແກ້ໄຂໃຫ້ຖືກຕ້ອງ ແລະ ນຳມາປັບປຸງເພື່ອແກ້ໄຂພຶດຕິກຳທີ່ເພິ່ງພໍໃຈຂອງຕົວນັກຮຽນໃນຊັ້ນຮຽນ ຫຼື ໃນໂຮງຮຽນ ເຊິ່ງເປັນໜ້າທີ່ຂອງຄູໝົດທຸກຄົນ ທີ່ຈະພ້ອມໃຈກັນແກ້ໄຂບັນຫາຕ່າງໆດັ່ງກ່າວ ການຈັດການຮຽນ-ການສອນທີ່ມີປະສິດທິພາບສາມາດວັດຜົນໄດ້ຈາກຜົນການຮຽນຂອງນັກຮຽນ ແລະ ໃນຂະບວນການຈັດການຮຽນ-ການສອນນັ້ນ ຕ້ອງຈຳກັດຢູ່ໃນໄລຍະຂອງປີການສຶກສາ ດັ່ງນັ້ນ ຫາກການຮຽນ-ການສອນດຳເນີນການໄປແຕ່ຜູ້ຮຽນບໍ່ສົນໃຈ ບໍ່ໃສ່ໃຈ ຫຼື ຂາດຮຽນກໍ່ຈະສົ່ງຜົນກະທົບຕໍ່ຜົນການຮຽນໄດ້ ໂດຍສະເພາະ ໃນປັດຈຸບັນນີ້ ການຂາດຮຽນຂອງນັກຮຽນແມ່ນເປັນບັນຫາອັນໃຫຍ່ໃນການຈັດການຮຽນ-ການສອນເພື່ອໃຫ້ມີປະສິທິພາບ ແລະ ໃນຈຳນວນນັກຮຽນທີ່ຂາດຮຽນກໍ່ມີຈຳນວນເພີ່ມຂຶ້ນ ທັງມີການວິໄຈເຖິງບັນຫາດັ່ງກ່າວແມ່ນມີຄວາມສຳຄັນໃນການທີ່ຈະເຮັດໃຫ້ຜູ້ຈັດການຮຽນ-ການສອນສາມາດຮັບຮູ້ເຖິງຕົ້ນປາຍສາເຫດຂອງບັນຫາ ສະພາບຄວາມເປັນຈິງ ສະພາບທີ່ຄາດຫວັງ ສາເຫດອັນແທ້ຈິງຂອງບັນຫາ ຄວາມສຳຄັນຂອງການແກ້ໄຂບັນຫາການຂາດຮຽນ ແລະ ສາມາດວາງແນວທາງໃນການປະຕິບັດແຜນເພື່ອທີ່ຈະແກ້ໄຂບັນຫາດັ່ງກ່າວ ທີ່ຈະມີຜົນກະທົບຕໍ່ກັບຕົວຜູ້ຮຽນ ແລະ ການສູນເສຍງົບປະມານທາງດ້ານການຈັດການຂອງວຽກງານການສຶກສາ ແລະ ນອກຈາກນີ້ ບັນຫາການຂາດຮຽນ ກໍ່ຍັງເກີດຈາກຕົວນັກຮຽນທີ່ຍັງບໍ່ທັນຮູ້ຈັກຕົນເອງວ່າຕົນເອງມີຄວາມອິດສະຫຼະໃນການຮຽນຫຼາຍເກີນໄປ ບໍ່ມີຄວາມຮັບຜິດຊອບຕໍ່ຕົນເອງ ເຊິ່ງມີຫຼາຍຄົນໄດ້ສະແດງຄວາມຄິດເຫັນໂດຍໃຫ້ເຫດຜົນວ່າ ນັກຮຽນເປັນຜູ້ໃຫຍ່ແລ້ວ ຄວນຈະຕ້ອງມີຄວາມຮັບຜິດຊອບຕໍ່ຕົນເອງ ການທີ່ບໍ່ເຂົ້າຮຽນນັ້ນກໍ່ເປັນທາງເລືອກທີ່ເຂົາຕັດສິນໃຈເລືອກເອງ ວ່າດ້ວຍ

ເຫດຜົນຫຍັງກໍ່ແລ້ວແຕ່. (ການສຶກສາບັນຫາການຂາດຮຽນຂອງນັກຮຽນໃນຫ້ອງປະຕິບັດການທາງພາສາ ມະຫາວິທະຍາໄລ ສີປະທຸມ)

ອີງຕາມ ການບັນທຶກຕິດຕາມການຂາດຮຽນຂອງນັກຮຽນຂອງນັກຮຽນໃນສົກຮຽນ: 2022-2023 ສະແດງໃຫ້ເຫັນວ່າຈໍານວນຢູ່ໂຮງຮຽນ ມັດທະຍົມສຶກສາ ຕອນຕົ້ນ ນະຄອນປາກເຊ ແຂວງຈໍາປາສັກ ເຊິ່ງໂດຍລວມແລ້ວແມ່ນມີຈໍານວນນັກຮຽນຂາດຫຼາຍສົມຄວນເຊິ່ງກວມເອົາຈໍານວນນັກຮຽນທັງໝົດໃນ ຊັ້ນມັດທະຍົມສຶກສາ ຕອນຕົ້ນ ມີຈໍານວນທັງໝົດ 1.767 ນ້ອງ. ຈໍານວນຂາດ 352 ນ້ອງ. ເທົ່າກັບ 19.92 %.

ດັ່ງນັ້ນ, ການສຶກສາແມ່ນມີຄວາມສໍາຄັນຢ່າງຫຼວງຫຼາຍຕໍ່ການພັດທະນາປະເທດຊາດໃຫ້ຈະເລີນ ກ້າວໜ້າ, ເພາະການສຶກສາເປັນຂະບວນການທີ່ສໍາຄັນໃນການພັດທະນາຊັບພະຍາກອນມະນຸດໃຫ້ເໝາະສົມກັບສະພາບສັງຄົມປັດຈຸບັນ ແລະ ສາມາດນໍາຄວາມຮູ້ ຄວາມສາມາດ ແລະ ທັກສະໄປປະຍຸກໃຊ້ ຫລື ປັບປ່ຽນພຶດຕິກໍາໃນການປະກອບອາຊີບ ຊ່ວຍແກ້ໄຂບັນຫາຕ່າງໆໃຫ້ບັນລຸໄປໄດ້ດ້ວຍດີ ຢ່າງມີຄຸນນະພາບຊ່ວຍໃຫ້ສາມາດດໍາລົງຕົນຢູ່ໃນສັງຄົມຢ່າງມີຄວາມສຸກ, ການສຶກສາຈຶ່ງເປັນການສ້າງຄົນເພື່ອ ນໍາໄປສູ່ການພັດທະນາປະເທດຊາດທີ່ໝັ້ນຄົງ ແລະ ຍືນຍົງ. ແຕ່ຖ້ານັກຮຽນມີການຂາດຮຽນຫຼາຍຈົນເກີນໄປກໍ່ຈະມີຜົນກະທົບຕາມມາເປັນຕົ້ນແມ່ນມີການຂາດສອບ, ຜົນການຮຽນຕໍ່າ ແລະ ອື່ນໆ ຈາກບັນຫາດັ່ງທີ່ໄດ້ກ່າວມາຂາງເທິງຜູ້ຄົ້ນຄວ້າຈຶ່ງໄດ້ມີຄວາມສົນໃຈໃນການຄົ້ນຄວ້າ "ສຶກສາສາເຫດທີ່ມີຜົນກະທົບຕໍ່ການຂາດຮຽນຂອງນັກຮຽນຊັ້ນມັດທະຍົມສຶກສາ ຕອນຕົ້ນ ນະຄອນປາກເຊ ແຂວງຈໍາປາສັກ" ເພື່ອນໍາຜົນການຄົ້ນຄວ້າໄປເປັນຜົນປະໂຫຍດ ໃຫ້ແກ່ຜູ້ບໍລິຫານການສຶກສາ, ຄູຜູ້ສອນ ໃນການບໍລິຫານການສຶກສາ ແລະ ການຈັດການຮຽນ-ການສອນ ໃຫ້ມີປະສິດທິພາບດີຍິ່ງຂຶ້ນ, ອີກດ້ານໜຶ່ງເພື່ອເປັນການລົດ ຈໍານວນອັດຕາການຂາດຮຽນຂອງນັກຮຽນລົງອີກໃນຕໍ່ໜ້າດ້ວຍເຫດທີ່ກ່າວມາຂ້າງເທິງນັ້ນ ຂ້າພະເຈົ້າຈຶ່ງມີຄວາມສົນໃຈໃນການສຶກສາຄົ້ນຄວ້າໃນບັນຫາຫົວຂໍ້ ດັ່ງກ່າວນີ້.

**2. ຄໍາຖາມຄົ້ນຄວ້າ**

1. ສາເຫດໃດແດ່ທີ່ມີຜົນຕໍ່ການຂາດຮຽນຂອງນັກຮຽນ ຢູ່ໂຮງຮຽນມັດທະຍົມສຶກສາ ຕອນຕົ້ນ ນະຄອນປາກເຊ ແຂວງຈໍາປາສັກ ເປັນແນວໃດ?
2. ແນວທາງໃນການແກ້ໄຂສາເຫດການຂາດຮຽນຂອງນັກຮຽນເປັນຄືແນວໃດ?

**3. ຈຸດປະສົງ**

1. ເພື່ອສຶກສາ ສາເຫດການຂາດຮຽນຂອງນັກຮຽນຊັ້ນມັດທະຍົມສຶກສາ ຕອນຕົ້ນ ນະຄອນປາກເຊ ແຂວງຈໍາປາສັກ

2. ເພື່ອສຶກສາແນວທາງໃນການແກ້ໄຂສາເຫດການຂາດຮຽນຂອງນັກຮຽນຊັ້ນມັດທະຍົມສຶກສາ ຕອນຕົ້ນ ນະຄອນປາກເຊ ແຂວງຈໍາປາສັກ

**4. ວິທີການຄົ້ນຄວ້າ**

1. ປະຊາກອນ ແລະ ກຸ່ມຕົວຢ່າງ

ປະຊາກອນທີ່ໃຊ້ໃນການສຶກສາຄົ້ນຄວ້າໃນຄັ້ງນີ້ໄດ້ແກ່ ຜູ້ບໍລິຫານການສຶກສາ ແລະ ຄູສອນ ຈໍານວນ 173 ທ່ານ ແລະ ນັກຮຽນ ຈໍານວນ 1962 ຄົນ. ລວມທັງໝົດ 2135 ຄົນ. ໃນໂຮງຮຽນ ມັດທະຍົມສຶກສາ ຕອນຕົ້ນ ນະຄອນປາກເຊ ແຂວງ ຈໍາປາສັກ. ຈໍານວນ 10 ຫຼັງໂຮງຮຽນ. ໃນສົກຮຽນ: 2022 - 2023.

ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາຄົ້ນຄວ້າໃນຄັ້ງນີ້ໄດ້ແກ່ ຜູ້ບໍລິຫານການສຶກສາ ແລະ ຄູສອນ ຈໍານວນ 120 ທ່ານ ແລະ ນັກຮຽນ ຈໍານວນ 332 ຄົນ. ລວມທັງໝົດ 452 ຄົນ. ໃນໂຮງຮຽນ ມັດທະຍົມສຶກສາ ຕອນຕົ້ນ ນະຄອນປາກເຊ ແຂວງ ຈໍາປາສັກ ໃນສົກຮຽນ: 2022 - 2023.

**ເຄື່ອງມືທີ່ໃຊ້ໃນເກັບກຳຂໍ້ມູນໃນການຄົ້ນຄວ້າແມ່ນໄດ້ແບ່ງອອກເປັນ 2 ພາກສ່ວນຄື**:

1. **ພາກສ່ວນຜູ້ບໍລິຫານ ແລະ ຄູສອນ**

ພາກສ່ວນຜູ້ບໍລິຫານ ແລະ ຄູສອນ ແບ່ງອອກເປັນ 3 ຂັ້ນຕອນດັ່ງນີ້:

**ຂັ້ນຕອນທີ 1.** ແບບສອບຖາມກ່ຽວກັບຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມເຊິ່ງປະກອບດ້ວຍ: ເພດ , ອາຍຸ, ຕຳແໜ່ງ, ວຸດທິການສຶກສາ, ປະສົບການເຮັດວຽກ.

**ຂັ້ນຕອນທີ 2.** ແບບສອບຖາມກ່ຽວກັບສາເຫດຂອງການຂາດຮຽນໃນການຄົ້ນຄວ້າ. ໃນ 8 ດ້ານ.

**ຂັ້ນຕອນທີ 3**. ຄຳຖາມປາຍເປີດເພື່ອສອບຖາມຄວາມຄິດເຫັນກ່ຽວກັບສາເຫດ ແລະ ວິທີແກ້ໄຂ ການຂາດຮຽນຂອງນັກຮຽນໃນ 8 ດ້ານ ແລະ ແບບສຳພາດສຳພາດຜູ້ບໍລິຫານການສຶກສາເພື່ອລົງເລິກຊອກຫາແນວທາງການແກ້ໄຂສາເຫດທີ່ມີຜົນຕໍ່ການຂາດຮຽນຂອງນັກຮຽນ ຢູ່ໂຮງຮຽນ ມັດທະຍົມສຶກສາ ຕອນຕົ້ນ ນະຄອນປາກເຊ ແຂວງ ຈຳປາສັກ.

2.ພາກສ່ວນນັກຮຽນ

ພາກສ່ວນນັກຮຽນແມ່ນໄດ້ແບ່ງອອກເປັນ 3 ຂັ້ນຕອນດັ່ງນີ້:

**ຂັ້ນຕອນທີ 1.** ແບບສອບຖາມກ່ຽວກັບຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມເຊິ່ງປະກອບດ້ວຍ: ເພດ, ອາຍຸ, ລະດັບວັດທະນະທຳ, ໂຮງຮຽນ.

**ຂັ້ນຕອນທີ 2.** ແບບສອບຖາມກ່ຽວກັບສາເຫດຂອງການຂາດຮຽນໃນການຄົ້ນຄວ້າ. ໃນ 8 ດ້ານ.

**ຂັ້ນຕອນທີ 3.** ຄຳຖາມປາຍເປີດເພື່ອສອບຖາມຄວາມຄິດເຫັນກ່ຽວກັບສາເຫດ ແລະ ວິທີແກ້ໄຂ ການຂາດຮຽນຂອງນັກຮຽນໃນ 8 ດ້ານ.

- ນຳແບບສອບຖາມທີ່ມີຄວາມທ່ຽງຕົງດ້ານເນື້ອໃນໄປທົດສອບໃຊ້ກັບຜູ້ຕອບແບບຖາມຢູ່ ໂຮງຮຽນມັດທະຍົມສົມບູນ ຂົວຕະພານ ທີ່ບໍ່ແມ່ນກຸ່ມຕົວຢ່າງຂອງການຄົ້ນຄວ້າໃນຄັ້ງນີ້. ໂດຍເລືອກເອົາຄູ ຈຳນວນ 25 ທ່ານ ແລະ ນັກຮຽນ ຈຳນວນ 50 ນ້ອງ ຢູ່ໂຮງຮຽນດັ່ງກ່າວໃນການທົດສອບ. ແລ້ວນຳເອົາໄປຊອກຫາຄວາມເຊື່ອໝັ້ນ ດ້ວຍວິທີຫາຄ່າສຳປະສິດອານຟາ ຄອນບາກ (Cronbach's Alpha Coeffient) (ກິຕິພົງ ລືນາມ : 170) ໂດຍໃຊ້ໂປຼແກຣມສຳເລັດຮູບຊ່ວຍໃນການວິເຄາະຂໍ້ມູນ ແລະ ໄດ້ຄ່າຄວາມເຊື່ອໝັ້ນຂອງແບບສອບຖາມ 0.92.

**5. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ**

ການວິເຄາະຂໍ້ມູນທີ່ໄດ້ມາຈາກການດຳເນີນການເກັບກຳລວບລວມຂໍ້ມູນ ຜູ້ຄົ້ນຄວ້າໄດ້ກວດສອບຄວາມຖືກຕ້ອງຂອງແບບສອບຖາມ ແລະ ປະມວນຜົນຂໍ້ມູນໂດຍໃຊ້ໂປຣແກຣມ ສຳເລັດຮູບ ຕາມຂັ້ນຕອນດັ່ງນີ້:

1. ວິເຄາະຂໍ້ມູນກ່ຽວກັບສະຖານະພາບຂອງຜູ້ຕອບແບບສອບຖາມໂດຍການແຈກແຈງຄວາມຖີ່ ແລະ ຫາຄ່າເປີເຊັນ (%).
2. ວິເຄາະຂໍ້ມູນແບບສອບຖາມຄວາມຄິດເຫັນກ່ຽວກັບ ສາເຫດການຂາດຮຽນຂອງນັກຮຽນຢູ່ໂຮງຮຽນ ມັດທະຍົມສຶກສາ ຕອນຕົ້ນ ນະຄອນປາກເຊ ແຂວງຈຳປາສັກ. ເຊິ່ງເປັນແບບສອບຖາມຫາຄ່າສະເລ່ຍ ($\bar{X}$) ແລະ ຄ່າຜັນປ່ຽນມາດຕະຖານ (S.D) ໂດຍການໃຊ້ໂປຣແກຣມ SPSS.

**6. ຜົນໄດ້ຮັບ**

ເປັນແນວທາງໃນການປັບປຸງ ແລະ ແກ້ໄຂສາເຫດການຂາດຮຽນຂອງນັກຮຽນໃຫ້ດີຂຶ້ນກວ່າເກົ່າ.

1. ສາມາດຮັບຮູ້ເຖິງສາເຫດການຂາດຮຽນຂອງນັກຮຽນ ຢູ່ໂຮງຮຽນມັດທະຍົມສຶກສາ ຕອນຕົ້ນ ນະຄອນປາກເຊ ແຂວງຈຳປາສັກ.
2. ນຳຜົນການສຶກສາຄົ້ນຄວ້າເພື່ອເຂົ້າໄປໃຊ້ໃນການປ້ອງກັນ ແລະ ແກ້ໄຂສາເຫດການຂາດ

ຮຽນຂອງນັກຮຽນ ຢູ່ໂຮງຮຽນມັດທະຍົມສຶກສາ ຕອນຕົ້ນ ນະຄອນປາກເຊ ແຂວງຈຳປາສັກ.

**7. ວິພາກຜົນ**

ຜົນການຄົ້ນຄວ້າເລື່ອງ ສຶກສາ ສາເຫດທີ່ມີຜົນກະທົບຕໍ່ການຂາດຮຽນຂອງນັກຮຽນ ຊັ້ນມັດທະຍົມສຶກສາ ຕອນຕົ້ນ ນະຄອນປາກເຊ ແຂວງ ຈຳປາສັກ. ຕໍ່ກັບການຂາດຮຽນຂອງນັກຮຽນໃນຊັ້ນມັດທະຍົມ ຕອນຕົ້ນ ນະຄອນປາກເຊ ແຂວງ ຈຳປາສັກ ພົບວ່າມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຖານ ໃນລະດັບຫຼາຍ ແລະ ປານກາງ ດັ່ງນີ້:

ຜົນການຄົ້ນຄວ້າເລື່ອງ ສຶກສາ ສາເຫດທີ່ມີຜົນກະທົບຕໍ່ການຂາດຮຽນຂອງນັກຮຽນ ຊັ້ນມັດທະຍົມສຶກສາ ຕອນຕົ້ນ ນະຄອນປາກເຊ ແຂວງ ຈຳປາສັກ. ຕໍ່ກັບການຂາດຮຽນຂອງນັກຮຽນໃນຊັ້ນມັດທະຍົມ ຕອນຕົ້ນ ນະຄອນປາກເຊ ແຂວງ ຈຳປາສັກ ພົບວ່າມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຖານ ໃນລະດັບຫຼາຍ. ແຕ່ເມື່ອພິຈາລະນາຕາມລາຍຂໍ້ແລ້ວ, ຂໍ້ທີ່ມີຄ່າສະເລ່ຍຫຼາຍ ໄດ້ແກ່: ດ້ານຜູ້ຮຽນ ເຊິ່ງມີ $(\overline{X} = 2.08)$, ດ້ານສະຖານການສຶກສາ ເຊິ່ງມີ $(\overline{X} = 2.47)$, ດ້ານລະບຽບວິໄນ ເຊິ່ງມີ $(\overline{X} = 2.52)$, ດ້ານຄູສອນເຊິ່ງມີ $(\overline{X} = 2.20)$ ແລະ ດ້ານສະພາບແວດລ້ອມ ແລະ ສັງຄົມ ເຊິ່ງມີ $(\overline{X} = 2.56)$. ເຊິ່ງຜູ້ຮຽນເປັນສ່ວນສຳຄັນຍິ່ງຂອງຂະບວນການຈັດການຮຽນ-ການສອນ ຫາກບໍ່ມີຜູ້ຮຽນ ການຮຽນການສອນກໍ່ບໍ່ສາມາດເກີດຂຶ້ນໄດ້ໃນລະບົບການຮຽນ-ການສອນ ນັກຮຽນຕ້ອງມີຄວາມພ້ອມທີ່ ຈະຮັບການຮຽນຮູ້ ແລະ ປະສົບການໃໝ່ທີ່ຈະເກີດຂຶ້ນ ຜູ້ຮຽນຈຳເປັນຕ້ອງມີຄວາມພ້ອມ ແລະ ມີພື້ນຖານຄວາມຮູ້ ຢ່າງພຽງພໍ ນັກຈິດວິທະຍາກຸ່ມມະນຸດນິຍົມເຊື່ອວ່າການສອບເສງຕົກ ຫຼື ບໍ່ບັນລຸຜົນການຮຽນເພາະພື້ນຖານຄວາມຕ້ອງການຂອງນັກຮຽນບໍ່ໄດ້ຮັບການຕອບສະໜອງ ຜູ້ຮຽນເປັນອົງປະກອບທາງການຮຽນທີ່ ສຳຄັນການສຶກສາຂໍ້ມູນຈາກຕົວຜູ້ ຮຽນ ຈຶ່ງນັບເປັນສິ່ງສຳຄັນໃນການຈັດການຮຽນການສອນໃຫ້ ມີ ປະສິດທິພາບ ການສຶກສາອົງປະກອບດ້ານຕ່າງໆ ເຊັ່ນ ດ້ານສະພາບແວດລ້ອມທາງເສດຖະກິດ ສັງຄົມການອົບຮົມເບິ່ງແຍງຈາກຄອບຄົວ ຄວາມຕ້ອງການຄວາມສົນໃຈ ບັນຫາຈາກຕົວຜູ້ຮຽນ ຄວາມພ້ອມ ດ້ານການຮຽນຮູ້ ຄວາມສາມາດຂອງຕົວຜູ້ຮຽນ ແລະ ຄວາມແຕກຕ່າງລະຫວ່າງບຸກຄົນເປັນອົງປະກອບທີ່ສຳຄັນຂອງການວາງແຜນການຈັດການຮຽນການດັ່ງທິດສະດີຂອງ ໄຊມົງຄົນ ຈຳຣຸນ, 2005, ໜ້າ 34. ກ່າວວ່າ: ສາເຫດດ້ານສ່ວນຕົວຂອງຜູ້ຮຽນເປັນເລື້ອງສະເພາະບຸກຄົນທີ່ກ່ຽວຂ້ອງກັບ ຮ່າງກາຍ ຈິດໃຈ ອາລົມສັງຄົມ ສະຕິປັນຍາ ຄ່ານິຍົມ ພຶດຕິກຳຄວາມສຳພັນທາງສັງຄົມພື້ນຖານຄອບຄົວ ບຸກຄະລິກກະພາບເປັນຕົ້ນ ເຊິ່ງສິ່ງຕ່າງໆເຫຼົ່ານີ້ ຈະສະແດງອອກໃນຊ່ວງໄວລຸ້ນ ຫຼື ຊ່ວງຂອງນັກສຶກສາເປັນສ່ວນໃຫຍ່ ເນື່ອງຈາກເປັນຊ່ວງຂອງການປ່ຽນແປງ ຫຼື ເປັນຂະບວນການໃນການພັດທະນາຈາກຄວາມເປັນເດັກນ້ອຍໄປສູ່ຄວາມເປັນຜູ້ໃຫຍ່ ບໍ່ຕ້ອງການໃຫ້ມີການບັງຄັບຄວບຄຸມແຕ່ຕ້ອງການອິດສະຫຼະພາບ ດັ່ງນັ້ນ ໃນການຈັດການສຶກສາຈຶ່ງຕ້ອງຄຳນຶງເຖິງປັດໄຈສຳຄັນນີ້ ເພາະນັກຮຽນເປັນອົງປະກອບສຳຄັນຂອງລະບົບການສຶກສາເພາະຖ້າຫາກຂາດນັກຮຽນ ການຮຽນ-ການສອນກໍ່ຈະບໍ່ເກີດຂຶ້ນ ການສຶກສາຂໍ້ມູນຂອງຜູ້ຮຽນເປັນສິ່ງສຳຄັນໃນການຈັດການຮຽນ ການສອນໃຫ້ມີປະສິດທິພາບ ແລະ ເກີດປະສິດທິຜົນ ສະຖານການສຶກສາ ແລະ ຄູສອນ ຈຶ່ງຕ້ອງສຶກສາຂໍ້ມູນສ່ວນຕົວໃນດ້ານຕ່າງໆຂອງຜູ້ຮຽນເຊັ່ນ: ສະພາບແວດລ້ອມ ເສດຖະກິດ ສັງຄົມ ຄວາມຕ້ອງການ ຄວາມສົນໃຈ ແລະ ຄວາມມຸ້ງຫວັງຕໍ່ສາຂາວິຊາທີ່ຮຽນ ບັນຫາກ່ຽວກັບຕົວຜູ້ຮຽນ ຄວາມພ້ອມໃນການຮຽນຮູ້ ບັນຫາສິ່ງເສບຕິດ ສະພາບແວດລ້ອມ ເນື້ອຫາວິຊາຍາກເກີນໄປ ການປັບຕົວເຂົ້າກັບສະພາບການຮຽນໃໝ່ ບໍ່ໄດ້ແບ່ງເວລາຮຽນ ບໍ່ເໝາະສົມ ຂາດຄວາມພະຍາຍາມຂາດຄວາມຕັ້ງໃຈໃນການຮຽນ

ເຂົ້າຮ່ວມກິດຈະກໍາຫຼາຍເກີນໄປປັບຕົວເຂົ້າກັບໝູ່ເພື່ອນບໍ່ໄດ້ແລະຄວາມແຕກຕ່າງລະຫວ່າງບຸກຄົນອາດເປັນອົງປະກອບທີ່ສໍາຄັນຂອງການວາງແຜນຈັດການຮຽນ ການສອນ ເພາະສິ່ງຕ່າງໆເຫຼົ່ານີ້ອາດສົ່ງຜົນໃຫ້ນັກຮຽນມີຜົນການຮຽນທີ່ບໍ່ຄ່ອຍດີຈະເປັນບັນຫາເຮັດໃຫ້ການຮຽນການສອນເກີດຜົນ ແລະ ສົ່ງຜົນໃຫ້ເປັນສາເຫດຂອງການຂາດໂຮງຮຽນ ແລະ ກໍ່ຈະກ້າວໄປເຖິງການປະລະການຮຽນໄດ້, ໃນດ້ານຄູສອນກໍ່ເຊັ່ນດຽວກັນດັ່ງທີ່ ອະແນກ ກຸລກຣິແສງ (2009, ໜ້າ 21) ໄດ້ກ່າວວ່າ: ລັກສະນະ ແລະ ການພັດທະນາຂອງນັກຮຽນ ນັກສຶກສາ ຄູຈະຕ້ອງເຂົ້າໃຈເປັນຢ່າງດີທັງໃນດ້ານພື້ນຖານຄວາມຮູ້ ຄວາມສາມາດທົ່ວໄປຂໍ້ບົກຜ່ອງສ່ວນຕົວຄວາມສາມາດສະເພາະຕົວ ສິ່ງເຫຼົ່ານີ້ແມ່ນມີອິດທິພົນຕໍ່ຄວາມພ້ອມໃນການຮຽນ ແລະ ວິທີການຮຽນຮູ້ຂອງນັກຮຽນ ນັກສຶກສາໃຫ້ເປັນຢ່າງດີ ຄວາມຮູ້ຄວາມເຂົ້າໃຈກ່ຽວກັບນັກຮຽນ ນັກສຶກສາຈະຊ່ວຍໃຫ້ຄູສາມາດແກ້ໄຂບັນຫາທີ່ຈະເກີດຂຶ້ນກ່ອນການສອນໄດ້ຢ່າງເໝາະສົມທັງໃນດ້ານການເລືອກຄວາມມຸ້ງຫວັງ ແລະ ຂະບວນການສອນນັກຮຽນ ນັກສຶກສາຈະມີຄວາມແຕກຕ່າງກັນຫຼາຍດ້ານທັງເພດ ອາຍຸ ສະຕິປັນຍາ ພື້ນຖານຄວາມຮູ້ ພື້ນຖານຂອງຄອບຄົວ ຖານະທາງເສດຖະກິດສັງຄົມສິ່ງເຫຼົ່ານີ້ແມ່ນມີອິດທິພົນຕໍ່ຜົນການຮຽນຮູ້ຂອງນັກຮຽນນັກສຶກສາຫຼາຍທີ່ສຸດ ຜູ້ສອນຈະຕ້ອງສາມາດພິຈາລະນາໄດ້ວ່ານັກຮຽນ ນັກສຶກສາແມ່ນມີຄວາມແຕກຕ່າງກັນໃນບາງດ້ານ.

ສຸຣະພັນ ຕັນສິຣິວົງ (1992, ໜ້າ 11-12) ການກຽມການສອນທີ່ດີແມ່ນເຮັດໃຫ້ການດໍາເນີນການສອນໄປດ້ວຍດີຖືກຕ້ອງ ແລະ ບໍ່ສັບສົນເຖິງແມ່ນວ່າການສອນຈະເປັນເລື່ອງທີ່ຫຍຸ້ງຍາກສັບສົນ ແລະ ມີຕົວແປປ່ວນຕ່າງໆແຕ່ຖ້າຫາກມີການກະກຽມການສອນໃຫ້ເປັນລະບົບກໍ່ຈະລຶດຄວາມກົດດັນ ແລະ ຄວາມສັບສົນລົງໄດ້ນໍາໄປສູ່ຈຸດໝາຍປາຍທາງໄດ້ຕົງຕາມເວລາທີ່ກໍານົດໄວ້ ແລະ ຈະຊ່ວຍໃຫ້ມີການວາງແຜນໃຫ້ນັກສຶກສາເຂົ້າຮ່ວມກິດຈະກໍານັກສຶກສາມີຄວາມສົນໃຈຍ້ອງຍໍຊົມເຊີຍຍິນດີມີຄວາມເຊື່ອໝັ້ນ ແລະ ສັດທາໃນໂຕຄູຫຼາຍຂຶ້ນເຊິ່ງຈະເຮັດໃຫ້ການຮຽນ ການສອນປະສົບຜົນສໍາເລັດຕາມເປົ້າໝາຍ ແລະ ວັດຖຸປະສົງຂອງການຮຽນການສອນ ແລະ ສະພາບແວດລ້ອມພາຍໃນສະຖານການສຶກສາກໍ່ເປັນສ່ວນໜຶ່ງທີ່ສໍາຄັນທີ່ຈະສະໜັບສະໜູນໃນດ້ານການຮຽນ-ການສອນໃຫ້ເປັນໄປຢ່າງມີປະສິດທິພາບ ແລະ ປະສິດທິຜົນ ສະພາບແວດລ້ອມເປັນອົງປະກອບ ຫຼື ບັນຫາທີ່ສະແດງເຖິງທ່າແຮງຂອງສະຖານການສຶກສາສາ (ກິດສະນາ ສັກສີ, 2007, ໜ້າ 441)

ຜົນການຄົ້ນຄວ້າເລື່ອງ ສຶກສາ ສາເຫດທີ່ມີຜົນກະທົບຕໍ່ການຂາດຮຽນຂອງນັກຮຽນ ຊັ້ນມັດທະຍົມສຶກສາ ຕອນຕົ້ນ ນະຄອນປາກເຊ ແຂວງ ຈໍາປາສັກ. ຕໍ່ກັບການຂາດຮຽນຂອງນັກຮຽນໃນຊັ້ນມັດທະຍົມ ຕອນຕົ້ນ ນະຄອນປາກເຊ ແຂວງ ຈໍາປາສັກ ພົບວ່າມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຖານ ໃນລະດັບປານກາງແມ່ນດ້ານຄອບຄົວທີ່ ມີເຊິ່ງມີ ($\bar{X}$ =2.64) ແລະ ດ້ານໝູ່ເພື່ອນ ເຊິ່ງມີ ($\bar{X}$ =2.72). ທັງນີ້ດ້ານຄອບຄົວ ແລະ ດ້ານໝູ່ເພື່ອນກໍ່ເປັນສ່ວນທີ່ມີຄວາມສໍາຄັນໜຶ່ງຕໍ່ກັບບັນຫາການຂາດຮຽນດັ່ງນັ້ນມັນຈຶ່ງສອດຄ່ອງກັບທິດສະດີຂອງ ມະຫາວິທະຍາໄລສຸໂຂໄທທໍາມາທິຣາດ ( 2001, ໜ້າ 17-18 ) ໄດ້ກ່າວໄວ້ວ່າ: ອິດທິພົນຈາກຄອບຄົວໄດ້ແກ່ ພໍ່ແມ່ພີ່ນ້ອງໃນຄອບຄົວເຊິ່ງມີລັກສະນະດັ່ງນີ້: ພໍ່ແມ່ມີລັກສະນະທີ່ແຕກຫັກ ບໍ່ເຂົ້າໃຈກັນ ເຊັ່ນ: ພໍ່ແມ່ແຍກກັນຢູ່, ຢ່າຮ້າງ, ຜິດຖຽງກັນ ເຮັດໃຫ້ລູກ ຂາດຄວາມເຊື່ອໝັ້ນ, ຂາດຄວາມເອົາໃຈໃສ່ໃນການເບິ່ງແຍງດູແລ ຫຼື ຂາດຄວາມອົບອຸ່ນ ຕ້ອງໄດ້ອອກຈາກເຮືອນໄປເພິ່ງພາຄົນອື່ນໂດຍສະເພາະແມ່ນຫມູ່ເພື່ອນ, ການຝຶກອົບຮົມເບິ່ງແຍງດູແລພໍ່ແມ່ກໍ່ໄດ້ປະປ່ອຍລະເລີຍ ຫຼື ເອົາໃຈໃສ່ຫຼາຍເກີນໄປເຮັດໃຫ້ລູກປັບຕົວ ໃນຄວາມເປັນຈິງຂອງສະຖານະການບໍ່ໄດ້ ສ້າງຄວາມຂັດແຍ້ງ ແລະ ຄວາມບໍ່ເຂົ້າໃຈຫຼາຍຂຶ້ນ. ອາດຈະຫັນໄປເພິ່ງ ເຫຼົ້າ,

ຢາສູບ, ຢາເສບຕິດ ແລະ ອື່ນໆ, ຄວາມສໍາພັນລະຫວ່າງ ລູກ ຖ້າພໍ່ແມ່ມີຄວາມເຂົ້າໃຈທີ່ດີຕໍ່ກັນ, ມັນຈະຫຼຸດຜ່ອນ ບັນຫາຂອງໄວລຸ້ນ-ໄວຫນຸ່ມໃຫ້ຫນ້ອຍລົງໄດ້ ເພາະວ່າ ເຂົາເຈົ້າສາມາດເພິ່ງພາພໍ່ແມ່ຂອງເຂົາເຈົ້າໄດ້, ຄວາມ ສໍາພັນລະຫວ່າງອ້າຍນ້ອງໃນຄອບຄົວ ພີ່ນ້ອງບໍ່ເຂົ້າໃຈ ກັນ, ຜິດຖຽງກັນ, ພໍ່ແມ່ຮັກນ້ອງຫຼາຍກວ່າອ້າຍ ຫຼື ຮັກ ໃຜຜູ້ໜຶ່ງໂດຍບໍ່ເທົ່າທຽມກັນກໍ່ຈະເກີດມີຄວາມແຕກ ແຍກ ແລະ ຄອບຄົວມີຄວາມຂາດເຂີນຈໍາເປັນຕ້ອງໄດ້ ໃຫ້ລູກຂາດຮຽນເພື່ອທີ່ຈະໄດ້ຊ່ວຍເຫຼືອພໍ່ແມ່ ແລະ ທິດ ສະດີຂອງ ສຸພາບ ກາລະປລູກ, 2011 : ໜ້າ 13. ກ່າວ ວ່າ: ໝູ່ເພື່ອນກໍ່ເປັນບັນຫາຢ່າງໜຶ່ງເປັນສາເຫດໃຫ້ ນັກຮຽນຂາດຮຽນ ໝູ່ເພື່ອນມີຫຼາຍປະເພດ ຖ້າເດັກ ນັກຮຽນຄົບຫາໝູ່ເພື່ອນທີ່ດີ ກໍ່ຈະນໍາໄປສູ່ທາງທີ່ດີ ແຕ່ ຖ້າຄົບຫາໝູ່ເພື່ອນທີ່ບໍ່ດີແລ້ວກໍ່ຈະນໍາພາໄປສູ່ການຂາດ ຮຽນ ໃນການຂາດຮຽນນີ້ບາງເທື່ອກໍ່ມີເຫດຜົນ ແລະ ບາງເທື່ອກໍ່ບໍ່ມີເຫດຜົນ ແຕ່ສ່ວນໃຫຍ່ແລ້ວກໍ່ບໍ່ຄ່ອຍຈະ ມີເຫດຜົນ ພຽງແຕ່ຂາດເພື່ອໄປທ່ຽວຫຼິ້ນຫາຄວາມ ເບີກບານມ່ວນຊື່ນ ຫຼື ຄົບຫາໝູ່ຄູ່ທີ່ເສເພ ນັກເລງອັນຕະ ພານ ກໍ່ຈະເປັນໄປດ້ວຍກັນ ໝູ່ເພື່ອນທີ່ເປັນຕົ້ນເຫດທີ່ ເຮັດໃຫ້ນັກຮຽນຂາດຮຽນມີດັ່ງນີ້: ເພື່ອນທີ່ບໍ່ດີ ຈະຊັກ ຊວນໄປໃນທາງທີ່ບໍ່ດີ ໄປມົກມຸ້ນກັບອະບາຍຍະມຸກ ໄປຫຼິ້ນເກມ ຕິດການພະນັນ ຈົນກະທັ້ງໄປເຖິງຕິດຢາ ເສບຕິດ ເຊິ່ງຈະເຮັດໃຫ້ນັກຮຽນບໍ່ມີເວລາຮຽນໜັງສື ຫຼື ໄປຮຽນກໍ່ບໍ່ຮູ້ເລື່ອງກ່ຽວກັບບົດຮຽນຈຶ່ງເປັນເຫດໃຫ້ ຂາດໂຮງຮຽນ ແລະ ໝູ່ເພື່ອນທີ່ເສເພເກເລອາດຈະຮ່ວມ ມືກັນຢອກໄຍອິດສາໝູ່ເພື່ອນນັກຮຽນດ້ວຍກັນ ແລະ ຖືກທາງໂຮງຮຽນໃສ່ລະບຽບວິໄນ ແລະ ຝາກໂທດໄວ້ຈຶ່ງ ບໍ່ກ້າທີ່ຈະມາໂຮງຮຽນ ຫຼື ຖືກໝູ່ເພື່ອນໃນໂຮງຮຽນທີ່ ໃຫຍ່ກວ່າຂູ່ເຂັນບັງຄັບບໍ່ໃຫ້ໄປໂຮງຮຽນດ້ວຍການ ທໍາຮ້າຍຮ່າງກາຍເດັກຈຶ່ງບໍ່ກ້າທີ່ຈະໄປໂຮງຮຽນ.

**8. ສະຫຼຸບຜົນ**

ອີງໃສ່ຈຸດປະສົງຂອງການສຶກສາເຊິ່ງປະກອບມີ, (1) ສຶກສາສາເຫດທີ່ມີຜົນຕໍ່ການຂາດຮຽນຂອງນັກຮຽນ ຊັ້ນມັດທະຍົມສຶກສາ ຕອນຕົ້ນ ນະຄອນປາກເຊ ແຂວງ ຈໍາປາສັກ, (2) ສຶກສາຄວາມຄິດເຫັນແນວທາງໃນການ ແກ້ໄຂຕໍ່ກັບສາເຫດການຂາດຮຽນຂອງນັກຮຽນຊັ້ນ ມັດທະຍົມສຶກສາ ຕອນຕົ້ນ ນະຄອນປາກເຊ ແຂວງ ຈໍາປາສັກ ເຊິ່ງການຄົ້ນຄວ້າຄັ້ງນີ້ແມ່ນໄດ້ນໍາໃຊ້ທັງແບບ ປະລິມານ ແລະ ຄຸນນະພາບ ໂດຍເຄື່ອງມືທີ່ໃຊ້ແມ່ນ ແບບສອບຖາມ ແລະ ແບບສໍາພາດ ແລະ ນໍາໃຊ້ສະຖິຕິ ພັນລະນາໃນການວິເຄາະຂໍ້ມູນດ້ານປະລິມານ ນອກຈາກ ນີ້ຂໍ້ມູນທີ່ໄດ້ຈາກການສໍາພາດແມ່ນນໍາໃຊ້ ການວິເຄາະ ເນື້ອໃນ (Content Analysis)

**1. ສາເຫດການຂາດຮຽນຂອງນັກຮຽນໃນ ດ້ານ ຄອບຄົວ**

ການຄົ້ນຄວ້ານີ້ພົບວ່າ: ສາເຫດ ການຂາດຮຽນ ຂອງນັກຮຽນໃນດ້ານຄອບຄົວແມ່ນຢູ່ໃນລະດັບປານກາງ ໂດຍສະເລ່ຍ ($\bar{X}$ =2.64) ແລະ ແຍກອອກໃຫ້ເຫັນວ່າ ການສຶກສາອົບຮົມ ເບິ່ງແຍງດູແລຂອງພໍ່ແມ່ຍັງເຮັດບໍ່ ທັນໄດ້ດີ ($\bar{X}$ = 3, 26) ນອນໃນລະດັບປານກາງ, ຄອບຄົວແມ່ນຢູ່ຫ່າງໄກຈາກໂຮງຮຽນດ້ວຍຄ່າສະເລ່ຍ ($\bar{X}$ = 2, 81) ນອນໃນລະດັບປານກາງ, ຄອບຄົວທຸກ ຍາກຂາດເຂີນດ້ວຍຄ່າສະເລ່ຍ ($\bar{X}$= 2, 67) ຍັງຢູ່ໃນ ລະດັບປານກາງ. ໃນທາງກົງກັນຂ້າມ, ພໍ່ແມ່ຢ່າຮ້າງກັນຢູ່ ໃນລະດັບຫຼາຍໂດຍສະເລ່ຍ ($\bar{X}$= 2, 22) ແລະ ຄອບຄົວນໍາໃຊ້ແຮງງານເດັກໃນການສ້າງລາຍຮັບໃຫ້ແກ່ ຄອບຄົວແມ່ນຢູ່ໃນລະດັບຫຼາຍຄ່າສະເລ່ຍ($\bar{X}$ = 2, 25) ດັ່ງນັ້ນຈຶ່ງຫມາຍຄວາມວ່າສາເຫດດ້ານຄອບຄົວແມ່ນມີ ຜົນທີ່ເຮັດໃຫ້ນັກຮຽນຂາດຮຽນ.

**2. ສາເຫດການຂາດຮຽນຂອງນັກຮຽນໃນ ດ້ານ ຜູ້ຮຽນ**

ການຄົ້ນພົບຂອງການຄົ້ນຄວ້າຄັ້ງນີ້ເຫັນວ່າການ ຂາດຮຽນຂອງນັກຮຽນທີ່ມີສາເຫດມາຈາກຕົວນັກຮຽນ

ເອງແມ່ນຢູ່ໃນລະດັບຫຼາຍ. ຈາກຕາຕະລາງນີ້ແຍກອອກໃຫ້ເຫັນວ່າຕົວຊີ້ວັດທັງໝົດແມ່ນມີຄ່າສະເລ່ຍໃນລະດັບຫຼາຍ ເປັນຕົ້ນແມ່ນ ມີບັນຫາກັບໝູ່ເພື່ອນຈິ່ງບໍ່ຢາກໄປຮຽນຄ່າສະເລ່ຍຫຼາຍສຸດ ($\bar{X}$ =1.64) ແລະ ໝູ່ເພື່ອນຊັກຊວນໄປໃນທາງທີ່ບໍ່ດີ ມີຄ່າສະເລ່ຍໜ້ອຍທີ່ສຸດ ($\bar{X}$ = 2.46) ຢູ່ໃນລະດັບປານກາງ. ໝາຍວ່າຕົວນັກຮຽນເອງແມ່ນກໍ່ມີຜົນໃນການຂາດໂຮງຮຽນ.

### 3.ສາເຫດການຂາດຮຽນຂອງນັກຮຽນໃນ ດ້ານສະຖານການສຶກສາ

ຜົນໄດ້ຮັບຂອງພາກນີ້ ສະແດງໃຫ້ເຫັນວ່າ ສາເຫດ ດ້ານສະຖານສຶກສາທີ່ມີຜົນຕໍ່ການຂາດຮຽນຂອງນັກຮຽນ ແມ່ນຢູ່ໃນລະດັບຫຼາຍ ໂດຍມີຄະແນນສະເລ່ຍ ($\bar{X}$ =1.92) ແລະ ບັນດາຕົວຊີ້ບອກຕົວອື່ນໆຍັງຢູ່ໃນລະດັບຫຼາຍເຊັ່ນດຽວກັນ. ດັ່ງນັ້ນ ສາເຫດ ດ້ານສະຖານສຶກສານີ້ ກໍ່ມີຜົນໃນການຂາດໂຮງຮຽນ.

### 4. ສາເຫດການຂາດຮຽນຂອງນັກຮຽນໃນ ດ້ານຫຼັກສູດການຮຽນ-ການສອນ

ອີງຕາມການຄົ້ນພົບ, ສາເຫດທີ່ມີຜົນຕໍ່ການຂາດຮຽນຂອງນັກຮຽນໃນ ດ້ານຫຼັກສູດການຮຽນ-ການສອນແມ່ນຢູ່ໃນລະດັບຫຼາຍ ໂດຍສະເລ່ຍ ($\bar{X}$ =1.98). ມີພຽງຕົວຊີ້ວັດດຽວທີ່ຢູ່ໃນລະດັບປານກາງ ທີ່ມີຄ່າສະເລ່ຍ ($\bar{X}$ =2.55) ສື່ການຮຽນ-ການສອນບໍ່ພຽງພໍກັບນັກຮຽນ. ການພັດທະນາ ແລະ ນຳໃຊ້ຫຼັກສູດບໍ່ມີຄວາມສອດຄ່ອງກັບທ່ອງຖິ່ນ ໂດຍສະເລ່ຍ ($\bar{X}$ =1.55) ນອນຢູ່ໃນລະດັບຫຼາຍ. ສະແດງໃຫ້ເຫັນວ່າ ດ້ານຫຼັກສູດການຮຽນ-ການສອນ,ເນື້ອໃນແຜນການສອນບໍ່ສອດຄ່ອງ, ບໍ່ໄດ້ນຳໃຊ້ນັກຮຽນເປັນໃຈກາງ ແລະ ບໍ່ມີຂະບວນການສ້າງແຮງຈູງໃຈເຂົ້າໃນການຮຽນ-ການສອນ ດັ່ງນັ້ນ ຈິ່ງເຮັດໃຫ້ນັກຮຽນບໍ່ມີສິ່ງຈູງໃຈ ແລະ ເຮັດໃຫ້ນັກຮຽນຂາດຮຽນໃນວິຊານັ້ນ.

### 5. ສາເຫດການຂາດຮຽນຂອງນັກຮຽນໃນ ດ້ານລະບຽບວິໄນຂອງສະຖານສຶກສາ

ຈາກການວິເຄາະຂໍ້ມູນ, ສາເຫດການຂາດຮຽນຂອງນັກຮຽນໃນ ດ້ານລະບຽບວິໄນຂອງສະຖານສຶກສາແມ່ນຢູ່ໃນລະດັບຫຼາຍ ໂດຍສະເລ່ຍ ($\bar{X}$ =2.06). ໃນຂະນະທີ່, ມີກົດລະບຽບ ແລະ ຂໍ້ບັງຄັບເຂັ້ມງວດເກີນໄປແມ່ນນອນໃນລະດັບປານກາງ ດ້ວຍຄ່າສະເລ່ຍ ($\bar{X}$ =2.53) ແລະ ຕົວຊີ້ບອກອື່ນໆ. ນອກຈາກນີ້ ແມ່ນຢູ່ໃນລະດັບຫຼາຍ ສະແດງໃຫ້ເຫັນວ່າ ນັກຮຽນຈຳນວນໜຶ່ງແມ່ນເຫັນວ່າກົດລະບຽບຂອງໂຮງຮຽນແມ່ນເຄັ່ງຄັດເກີນໄປ ເຊິ່ງອາດຈະເປັນສາເຫດໜຶ່ງທີ່ນັກຮຽນຈະຂາດຮຽນໄດ້.

### 6. ສາເຫດການຂາດຮຽນຂອງນັກຮຽນໃນດ້ານຄູສອນ

ສະຫຼຸບໄດ້ວ່າ ສາເຫດການຂາດຮຽນຂອງນັກຮຽນໃນ ດ້ານຄູສອນ ແມ່ນຢູ່ໃນລະດັບ. ແຕ່ມີໜຶ່ງຕົວຊີ້ບອກທີ່ນອນໃນລະດັບປານກາງທີ່ມີຄະແນນສະເລ່ຍ ($\bar{X}$ =2.75) ຄື ການຈັດການຮຽນ-ການສອນບໍ່ເປັນທີ່ໜ້າສົນໃຈ. ໝາຍວ່າ ດ້ານຄູສອນແມ່ນໄດ້ມີຜົນຕໍ່ການຂາດຮຽນຂອງນັກຮຽນ ເພາະຜົນການຄົ້ນຄວ້າສະແດງໃຫ້ເຫັນວ່າໃນແຕ່ລະຕົວຊີ້ບອກແມ່ນຢູ່ໃນລະດັບຫຼາຍ ມີພຽງຕົວຊີ້ບອກດຽວທີ່ວ່າ ການຈັດການຮຽນ-ການສອນຂອງຄູບໍ່ເປັນທີ່ໜ້າສົນໃຈໃນລະດັບປານກາງນັ້ນ. ດັ່ງນັ້ນ ຄູຄວນຈັດການຮຽນໃນຫ້ອງຮຽນ ແລະ ນອກຫ້ອງຮຽນ, ມີການນຳໃຊ້ສື່ປະກອບການສອນເພື່ອເສີມສ້າງແຮງຈູງໃຈໃຫ້ນັກຮຽນ ແລະ ເຮັດໃຫ້ນັກຮຽນມີສ່ວນຮ່ວມໃນການຮຽນ-ການສອນ ຢ່າງສະເໝີພາບ.

### 7. ສາເຫດການຂາດຮຽນຂອງນັກຮຽນໃນ ດ້ານໝູ່ເພື່ອນ

ພົບວ່າ ສາເຫດການຂາດຮຽນຂອງນັກຮຽນໃນດ້ານໝູ່ເພື່ອນ ແມ່ນຢູ່ໃນລະດັບປານກາງ ໂດຍສະເລ່ຍ ($\bar{X}$ =2.72). ເມື່ອຈຳແນກໃນແຕ່ລະຕົວຊີ້ບອກເຫັນໄດ້

ດັ່ງນີ້ ການຊ່ວຍເຫຼືອໃນການຄົ້ນຄວ້າຮໍ່າຮຽນພາຍໃນຫ້ອງຮຽນ ແລະ ນອກຫ້ອງຮຽນ ແມ່ນມີຫຼາຍ ຜົນການຄົ້ນຄວ້າແມ່ນຢູ່ໃນລະດັບຫຼາຍ ດ້ວຍຄ່າສະເລ່ຍ ($\bar{X}$ =2.37), ການສ້າງກິດຈະກໍາເສີມສ້າງຄວາມສາມັກຄີຮ່ວມກັນໃນຊັ້ນຮຽນແມ່ນມີໜ້ອຍ ນອນໃນລະດັບປານກາງດ້ວຍຄ່າສະເລ່ຍ ($\bar{X}$ = 2, 82), ການມອບໝາຍວຽກບ້ານເປັນກຸ່ມເປັນຄູ່ແມ່ນບໍ່ຄ່ອຍໄດ້ປະຕິບັດ ແລະ ການຮຽນແບບເພື່ອນຊ່ວຍເພື່ອນແມ່ນໄດ້ຈັດຕັ້ງປະຕິບັດໜ້ອຍໃນເວລາຮຽນ ທັງສອງຕົວຊີ້ວັດແມ່ນມີຄ່າສະເລ່ຍ ເທົ່າກັນ ($\bar{X}$ = 2, 70). ໝາຍວ່າ ດ້ານໝູ່ເພື່ອນແມ່ນກໍ່ມີຜົນຕໍ່ການຂາດຮຽນຂອງນັກຮຽນ.

**8. ສາເຫດການຂາດຮຽນຂອງນັກຮຽນໃນ ດ້ານສະພາບແວດລ້ອມ-ສັງຄົມ**

ຜົນການຄົ້ນພົບສະແດງໃຫ້ເຫັນວ່າ, ສາເຫດທີ່ມີຜົນຕໍ່ການຂາດຮຽນຂອງນັກຮຽນໃນດ້ານສະພາບແວດລ້ອມ-ສັງຄົມ ຢູ່ໃນໂຮງຮຽນມັດທະຍົມ ສຶກສາ ຕອນຕົ້ນ ທີ່ຂຶ້ນກັບ ຫ້ອງການສຶກສາທິການ ແລະ ກິລານະຄອນປາກເຊ ແມ່ນຢູ່ໃນລະດັບຫຼາຍ ດ້ວຍຄ່າສະເລ່ຍ ($\bar{X}$ = 1,94) ແລະ ໃນແຕ່ລະຕົວຊີ້ບອກ ກໍ່ແມ່ນມີຄ່າສະເລ່ຍຢູ່ໃນລະດັບຫຼາຍທຸກຕົວຊີ້ບອກ ເຊິ່ງມັນສະແດງໃຫ້ເຫັນວ່າ ໃນດ້ານສະພາບແວດລ້ອມ ແລະ ສັງຄົມແມ່ນມີມີຜົນຕໍ່ການຂາດຮຽນຂອງນັກຮຽນ.

ເພື່ອສະຫຼຸບສັງລວມຜົນການຄົ້ນຄວ້າ ຈຸດປະສົງທີ 2. ກ່ຽວກັບວິທີການແກ້ໄຂສາເຫດການຂາດຮຽນຂອງນັກຮຽນຢູ່ໂຮງຮຽນ ມັດທະຍົມສຶກສາ ຕອນຕົ້ນ ນະຄອນປາກເຊ ແຂວງຈໍາປາສັກ ຈາກການຕອບຄໍາຖາມປາຍເປີດເພື່ອຕອບຈຸດປະສົງທີ 2 ນັ້ນ. ສາມາດສະຫຼຸບໄດ້ດັ່ງນີ:

1. **ວິທີການແກ້ໄຂສາເຫດທີ່ມີຜົນຕໍ່ການຂາດຮຽນຂອງນັກຮຽນໃນດ້ານຄອບຄົວ.**

ຄູຕ້ອງເອົາໃຈໃສ່ປະສານສົມທົບກັບອໍານາດການປົກຄອງທີ່ກ່ຽວຂ້ອງໃນການເກັບກໍາຂໍ້ມູນຂອງຄອບຄົວຜູ້ທີ່ທຸກຍາກຂາດເຂີນ ເພື່ອນໍາມາຄົ້ນຄວ້າພິຈາລະນາໃນການສົ່ງເສີມເດັກຜູ້ທີ່ປາກຮຽນ ຄວນມີການສະເໜີຕໍ່ຂັ້ນເທິງເພື່ອຈະມີນະໂຍບາຍແກ່ຜູ້ທີ່ທຸກຍາກຂາດເຂີນ, ລົງຕິດຕາມຊຸກຍູ້ໃຫ້ຜູ້ກ່ຽວໄດ້ກັບມາຮຽນຄືນຜູ້ປົກຄອງຕ້ອງໄດ້ຫັນມາເອົາໃຈໃສ່ ຕໍ່ການສຶກສາອົບຮົມບົ່ມສອນແນວຄິດຂອງນັກຮຽນກໍ່ຄືລູກຂອງຕົນເອງເພື່ອເປັນການປັບປຸງແກ້ໄຂສາເຫດທີ່ມີຜົນຕໍ່ການຂາດຮຽນ, ເຫັນເຖິງອະນາຄົດຂອງລູກຫຼານ ແລະ ຄວາມສໍາຄັນຂອງວຽກງານການສຶກສາ.

2. **ວິທີການແກ້ໄຂສາເຫດທີ່ມີຜົນຕໍ່ການຂາດຮຽນຂອງນັກຮຽນໃນດ້ານ**

ຄອບຄົວ ພ້ອມດ້ວຍຄູ-ອາຈານ ຕ້ອງໄດ້ປະສານສົມທົບເອົາໃຈໃສ່ໃນການຕິດຕາມ, ກວດກາ, ສຶກສາອົບຮົມທາງດ້ານແນວຄິດ ແລະ ພຶດຕິກໍາການເຄື່ອນໄຫວຂອງຜູ້ກ່ຽວ, ຕ້ອງໄດ້ມີກິດຈະກໍາໃຫ້ລູກຫຼານຂອງຕົນໄດ້ເຮັດຫຼາຍຂຶ້ນເພື່ອຫຼີກລ້ຽງໃຫ້ເດັກຫ່າງຈາກການຫຼິ້ນໂທລະສັບ ແລະ ກັບມາໃຫ້ມີຄວາມສົນໃຈໃນການຮໍ່າຮຽນຂຶ້ນຕື່ມ. ຜູ້ປົກຄອງຕ້ອງໄດ້ແນະນໍາ ຫຼື ນໍາພາລູກຂອງຕົນຕ້ອງໄດ້ຮຽນຄືນ ຫຼື ຮຽນເພີ່ມຄືນອີກຢູ່ເຮືອນຂອງຕົນ, ຊຸມຊົນ ແລະ ສັງຄົມ ໂດຍສະເພາະແມ່ນຕ້ອງໄດ້ຕິດຕາມກວດກາຄືນປຶ້ມບົດຮຽນລູກຂອງຕົນເອງຢູ່ສະເໝີ, ເວລາເດັກໄດ້ຮັບວຽກບ້ານເມືອເຮັດຢູ່ເຮືອນຜູ້ປົກຄອງກໍ່ຕ້ອງໄດ້ແນະນໍາ-ນໍາພາເຂົາເຈົ້າແກ້ວຽກບ້ານນັ້ນ, ຄວາມສໍາພັນລະຫວ່າງຄອບຄົວກໍ່ຈະເພີ່ມຂຶ້ນ, ຈະເຮັດໃຫ້ເດັກມີຄວາມສົນໃຈກັບການຮຽນຫຼາຍຂຶ້ນ ຫຼື ທາງໂຮງຮຽນຕ້ອງວາງກົດລະບຽບທີ່ເຂັ້ມງວດກວ່າເກົ່າທີ່ຜ່ານມາຕໍ່ຜູ້ຮຽນ ແລະ ທາງໂຮງຮຽນກໍ່ຕ້ອງໄດ້ເອົາໃຈໃສ່ຢ່າງເຂັ້ມງວດໃນການຈັດຕັ້ງການບໍາລຸງນັກຮຽນຜູ້ທີ່ຮຽນອ່ອນໃຫ້ຫຼາຍຂຶ້ນ.

3. **ວິທີການແກ້ໄຂສາເຫດທີ່ມີຜົນຕໍ່ການຂາດຮຽນຂອງນັກຮຽນໃນດ້ານສະຖານການສຶກສາ.**

ຜູ້ບໍລິຫານການສຶກສາ ແລະ ພາກສ່ວນທີ່ກ່ຽວຂອງຕ້ອງມີການຂຶ້ນແຜນໃນການສ້າງ ຫຼື ຜະລິດສື່ການຮຽນ-ການສອນໃຫ້ດີຍິ່ງຂຶ້ນກວ່າເກົ່າເພື່ອໃຫ້ທັນກັບຍຸກທີ່ທັນສະໃໝໂດຍນຳໃຊ້ອຸປະກອນເທັກໂນໂລຊີເຂົ້າມາຊ່ວຍໃນການຜະລິດອຸປະກອນການສອນ ແລະ ການສິດສອນເພື່ອໃຫ້ມີຄວາມສະດວກງ່າຍດາຍ, ເພີ່ມສິ່ງອຳນວຍຄວາມສະດວກໃນດ້ານການຮຽນ-ການສອນອຸປະກອນການສອນຕ້ອງຫຼາກລາຍ, ຕ້ອງມີຫໍສະໝຸດ, ແຫຼ່ງການຄົ້ນຄວ້າຮ່ຳຮຽນໃຫ້ຫຼາຍຂຶ້ນ ເພື່ອໃຫ້ນັກຮຽນໄດ້ສະຖານທີ່ໃນການຄົ້ນຄວ້າຮ່ຳຮຽນ. ຕ້ອງໄດ້ປະສານສົມທົບກັບຊຸມຊົນເພື່ອຊອກແຫຼ່ງທຶນມາພັດທະນາທາງດ້ານວຽກງານວິຊາການ ແລະ ສະຖານທີ່ບ່ອນຫຼິ້ນກິລາໃຫ້ຄົບຖ້ວນ.

**4. ວິທີການແກ້ໄຂສາເຫດທີ່ມີຜົນຕໍ່ການຂາດຮຽນຂອງນັກຮຽນໃນດ້ານຫຼັກສູດການຮຽນທ-ການສອນ.**

ສາເຫດດັ່ງກ່າວມານັ້ນຜູ້ບໍລິຫານການສຶກສາ ແລະ ຄູສອນຕ້ອງໄດ້ມີການປັບປຸງແກ້ໄຂກ່ຽວກັບຫຼັກສູດເພີ້ມຕື່ມໃນບາງຈຸດທີ່ບໍ່ທັນສອດຄ່ອງເພື່ອໃຫ້ມີຄວາມເຂົ້າໃຈງ່າຍຂຶ້ນ, ຕ້ອງໄດ້ນຳສະເໜີຂັ້ນເທິງເພື່ອຊອກຫາຈັດປື້ມຄູ່ມື ແລະ ປື້ມແບບຮຽນໃຫ້ຄົບຖ້ວນ, ຈັດໃຫ້ມີການຝຶກອົບຮົມ ຫຼື ນິເທດພາຍໃນໂດຍການເຊີນຄູນິເທດທີ່ກ່ຽວຂ້ອງໃນວິຊານັ້ນຕື່ມເພື່ອໃຫ້ມີຄວາມຊຳນານ, ໃນການສອນຕ້ອງໄດ້ເນັ້ນຄືນກ່ຽວກັບການສອນແບບເອົານັກຮຽນເປັນໃຈກາງໃຫ້ຫຼາຍໆ, ສ້າງແຮງຈູງໃຈໃຫ້ເດັກມີຫ້າວຫັ້ນໃນການຮ່ຳຮຽນ ມີສ່ວນຮ່ວມໃນການຮຽນ-ການສອນໃຫ້ເພີ່ມຂຶ້ນ.

**5. ວິທີການແກ້ໄຂສາເຫດທີ່ມີຜົນຕໍ່ການຂາດຮຽນຂອງນັກຮຽນໃນດ້ານລະບຽບວິໄນຂອງສະຖານການສຶກສາ**

ແມ່ນຢາກໃຫ້ທາງໂຮງຮຽນກໍ່ຄືທາງຜູ້ບໍລິຫານການສຶກສາຕ້ອງໄດ້ມີວິທີທາງການແກ້ໄຂ, ປັບປຸງດັດແປງແກ້ໄຂເພື່ອໃຫ້ມີຄວາມແທດເໝາະກັບທ້ອງຖິ່ນນັ້ນ, ຕ້ອງໄດ້ວາງລະບຽບໃຫ້ມີຄວາມເຂັ້ມງວດຂຶ້ນກວ່າເກົ່າເພື່ອປັບປຸງແກ້ໄຂພຶດຕິກຳຂອງນັກຮຽນ ແລະ ການສົ່ງຂ່າວຫາຜູ້ປົກຄອງກໍ່ຕ້ອງໃຫ້ລະບຽບແບບແຜນວິທີການໃຫເຮັດກຸມທ່ວງທັນກັບເວລາເພື່ອຊ່ວຍໃນການແກ້ໄຂບັນຫາໃຫ້ທັນການ, ຕ້ອງໄດ້ເພີ່ມທະວີການຕິດຕາມສົ່ງຂາ່ວ, ໃຫ້ຄຳປຶກສາແນະນຳ ຫຼື ຕ້ອງໄດ້ສຶກສາອົບຮົມຜູ້ກ່ຽວ.

**6. ວິທີການແກ້ໄຂສາເຫດທີ່ມີຜົນຕໍ່ການຂາດຮຽນຂອງນັກຮຽນໃນດ້ານຄູສອນ.**

ຜູ້ບໍລິຫານການສຶກສາ, ຜູ້ຊີ້ນຳວຽກງານວິຊາການ ແລະ ຄູສອນແຕ່ລະວິຊາຕ້ອງໄດ້ເອົາໃຈໃສ່ຄືນໃນການປະຕິບັດໂຄງການຫຼັກສູດໂດຍການນຳໃຊ້ 5 ຫຼັກມູນຂອງການສຶກສາມີຈັນຍາບັນຈັນຍາທຳຕໍ່ອາຊີບຂອງຕົນ, ຕ້ອງໄດ້ມີວິທີການໃນການຈັດສັນຄູສອນໃຫ້ຖືກຕ້ອງຕາມລາຍວິຊາ. ຕ້ອງໄດ້ເອົາໃຈໃສ່ຜະລິດ ແລະ ນຳໃຊ້ສື່ການຮຽນ-ການສອນ ເພື່ອປະກອບເຂົ້າໃນການສ້າງກິດຈະກຳການຮຽນ -ການສອນ ຫຼື ສ້າງກິດຈະກຳໃຫ້ມີການຜ່ອນຄາຍໃນເວລາຮຽນ ແລະ ພາຍໃນໂຮງຮຽນພວກເຮົາກໍ່ຕ້ອງໄດ້ມີການຂຶ້ນແຜນຮ່ວມໂມງສອນ, ຈັດການນິເທດ ຝຶກອົບຮົມໃຫ້ເປັນປົກກະຕິເພື່ອເຮັດໃຫ້ຄຸນນະພາບການຮຽນ-ການສອນໃຫ້ດີຂຶ້ນເທື່ອລະກ້າວ.

**1. ວິທີການແກ້ໄຂສາເຫດທີ່ມີຜົນຕໍ່ການຂາດຮຽນຂອງນັກຮຽນໃນດ້ານໝູ່ເພື່ອນ**

ຜູ້ບໍລິຫານການສຶກ, ຄູສອນກໍ່ຄືທາງໂຮງຮຽນກໍ່ຕ້ອງໄດ້ມີການແນະນຳ, ປູກຈິດສຳນຶກ, ສຶກສາອົບຮົມແນວຄິດໃຫ້ແກ່ນັກຮຽນຕ້ອງໄດ້ເພີ່ມທະວີໃນການຊ່ວຍເຫຼືອ, ສາມັກຄີຮັກແພງໃຫ້ມີຄວາມແໜ້ນແຟ້ນ.

**2. ວິທີການແກ້ໄຂສາເຫດທີ່ມີຜົນຕໍ່ການຂາດຮຽນຂອງນັກຮຽນໃນດ້ານສະພາແວດລ້ອມ ແລະ ສັງຄົມ**

ທາງຜູ້ບໍລິຫານການສຶກສາຕ້ອງໄດ້ປະສານສົມທົບກັບຄະນະພັດທະນາການສຶກສາຂັ້ນບ້ານ ແລະ ອຳນາດການປົກຄອງ ເພື່ອຊ່ວຍເຫຼືອກັນໃນການຊອກຫາວິທີແກ້

ໄຂຕ້ອງໄດ້ລົງເລີກກັບຄອບຄົວປະຊາຊົນທີ່ຢູ່ອ້ອມຂ້າງ ເພື່ອຊ່ວຍກັນໃນການຫຼຸດຜ່ອນການຖິ້ມຂີ້ເຫຍື້ອຊະຊາຍ ແລະ ລົດສຽງເນືອງນັນລົບກວນ. ພາຍໃນໂຮງຮຽນກໍ່ຕ້ອງໄດ້ມີການປູກຈິດສຳນຶກໃນການຮັກສາຄວາມສະອາດບໍ່ຖິ້ມຂີ້ເຫຍື້ອຊະຊາຍ, ປູກຕົ້ນໄມ້ໃຫ້ຮົ່ມ ແລະ ກິນໝາກ ເພື່ອສ້າງສະພາບແວດລ້ອມໃຫ້ດີຂຶ້ນ. ປະສານສົມທົບກັບອຳນາດການປົກຄອງທ້ອງຖິ່ນອີກໃນການລະດົມຊອກແຫຼ່ງທຶນງົບປະມານເພື່ອມາຊ່ວຍສ້າງເດີ່ນຫຼິ້ນກິລາໃຫ້ຄົບຖ້ວນທີ່ຈະດຶງດູດຈິດໃຈນັກຮຽນຢາກຈະຢູ່ໂຮງຮຽນ ແລະ ບໍ່ຂາດຮຽນ.

ເຖິງຢ່າງໃດກໍ່ຕາມ, ຈາກຜົນການສຶກສາທັງ 8 ດ້ານ ສາມາດສະຫຼຸບໄດ້ວ່າ: ດ້ານຄອບຄົວ ແລະ ດ້ານໝູ່ເພື່ອນ ແມ່ນມີຜົນຕໍ່ການຂາດຮຽນຂອງນັກຮຽນໃນລະດັບ ປານກາງ ເຊິ່ງເປັນສິ່ງທີ່ຜູ້ບໍລິຫານການສຶກສາຈະຕ້ອງໄດ້ເອົາໃຈໃສ່ໃນການຕິດຕາມສະພາບດ້ານຄອບຄົວຂອງນັກຮຽນ ແລະ ຕົວນັກຮຽນຢ່າງໃກ້ຊິດຕິດແທດເພື່ອຊຸກຍູ້ ແລະ ຊ່ວຍເຫຼືອເຂົາເຈົ້າ.

## 9. ຄວາມຮູ້ບຸນຄຸນ

ກ່ອນອື່ນຜູ້ຄົ້ນຄວ້າຂໍຕີລາຄາສູງ ແລະ ຮູ້ບຸນຄຸນມາຍັງຄູທີ່ປຶກສາ ທ່ານ ປອ ຂັນທະລີ ພົມມະເສນ ແລະ ຜູ້ຊ່ວຍຄູທີ່ປຶກສາ ທ່ານ ປທ ສີສະໄໝ ດວງມະນີ ແລະ ທ່ານ ປທ ສະເຫຼີມໄຊ ແກ້ວກະເສີມສຸກ ທີ່ໄດ້ເສຍສະຫຼະ ແລະ ອຸທິດສະຕິປັນຍາ, ຄວາມພະຍາຍາມ ແລະ ເວລາອັນມີຄ່າຊ່ວຍແນະນຳເຮັດໃຫ້ການຂຽນວິທະຍານິພົນຂອງ ຂ້າພະເຈົ້າມີຜົນສຳເລັດສູງ.

ຂໍສະແດງຄວາມຂອບໃຈມາຍັງຄະນະພັກ, ຄະນະນຳ ພ້ອມດ້ວຍຄະນະຮັບຜິດຊອບຫຼັກສູດ ທີ່ຄະນະສຶກສາສາດ, ມະຫາວິທະຍາໄລ ຈຳປາສັກ ທີ່ໄດ້ອຳນວຍຄວາມສະດວກ ແລະ ໃຫ້ໂອກາດຜູ້ຄົ້ນຄວ້າໄດ້ສຶກສາຮຽນຮູ້ໃນຫຼັກສູດປະລິນຍາໂທ ສຶກສາສາດ ສາຂາວິທະຍາສາດການສຶກສາ. ຕະຫຼອດທ່ານຄະນະກຳມະການປ້ອງກັນວິທະຍານິພົນ ທີ່ໄດ້ເສຍສະຫຼະເຫື່ອແຮງສະຕິປັນຍາ ໃຫ້ຄຳແນະນຳ ແລະ ມີຄຳເຫັນຕໍ່ວິທະຍານິພົນຂອງຂ້າພະເຈົ້າໄດ້ຮັບການປັບປຸງ ແລະ ມີຜົນສຳເລັດສູງ.

ຂໍສະແດງຄວາມຮູ້ບຸນຄຸນມາຍັງຄູ-ອາຈານທີ່ສິດສອນ ທີ່ໄດ້ຖ່າຍທອດຄວາມຮູ້ ແລະ ປະສົບການໃນແຕ່ລະວິຊາຮຽນ ເຮັດໃຫ້ຜູ້ຄົ້ນຄວ້າໄດ້ພັດທະນາແນວຄວາມຄິດ, ຈິດໃຈ ແລະ ຈິນຕະນາການໃໝ່ ເພື່ອນຳເອົາໄປຜັນຂະຫຍາຍພັດທະນາກົມກອງ ແລະ ອົງການຈັດຕັ້ງຂອງຜູ້ຄົ້ນຄວ້າໃນອານາຄົດ. ຂໍສະແດງຄວາມຮັກແພງເພື່ອນມິດຮ່ວມຮຸ່ນດຽວກັນທີ່ໄດ້ແລກປ່ຽນຮຽນຮູ້ປະສົບການທັງດ້ານວິຊາການ ແລະ ປະສົບການຊີວິດແກ່ຜູ້ຄົ້ນຄວ້າໄດ້ຮຽນຮູ້ຢ່າງເລິກເຊິ່ງ.

ຂໍຖືໂອກາດນີ້ ສະແດງຄວາມຮູ້ບຸນຄຸນມາຍັງອົງການຈັດຕັ້ງຂອງຜູ້ຄົ້ນຄວ້າ ກໍ່ຄືຫ້ອງການສຶກສາທິການ ແລະ ກິລາ ນະຄອນປາກເຊ ທີ່ໄດ້ຊຸກຍູ້ສົ່ງເສີມ ແລະ ໃຫ້ໂອກາດຜູ້ຄົ້ນຄວ້າໄດ້ຍົກລະດັບວິຊາສະເພາະຂອງຕົນຈົນໄດ້ຮັບຜົນສຳເລັດ.

ທ້າຍສຸດນີ້ ຜູ້ຄົ້ນຄວ້າຂໍສະແດງຄວາມຮູ້ບຸນຄຸນມາຍັງພໍ່ແມ່, ຄອບຄົວ, ອ້າຍເອື້ອຍນ້ອງ ແລະ ສັງຄົມເພື່ອນມິດສະຫາຍທີ່ຮັກແພງທີ່ໄດ້ໃຫ້ກຳລັງໃຈ ແລະ ໃຫ້ການສະໜັບສະໜູນຂ້າພະເຈົ້າສູ້ຊົນສຶກສາຮ່ຳຮຽນຈົນໄດ້ຮັບຜົນສຳເລັດໃນທຸກບາດກ້າວການສຶກສາຮ່ຳຮຽນໃນຕະຫຼອດສອງປີຜ່ານມາ.

## 10. ເອກະສານອ້າງອີງ

ກະຊວງສຶກສາທິການ ແລະ ກິລາ: ວິໄອທັດການພັດທະນາການສຶກສາ ແລະ ກິລາ ຮອດປີ 2030 ແລະ ຍຸດທະສາດ ປີ 2025 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ 8 (2016-2020) ນະຄອນຫຼວງວຽງຈັນ: 2015.

ກະຊວງສຶກສາທິການ ແລະ ກິລາ ພະແນກສຶກສາທິ

ການ ແລະ ກິລາແຂວງ (2020). ບົດສະຫຼຸບ ແລະ ແຜນພັດທະນາການສຶກສາ ພະແນກສຶກສາທິການ ແລະ ກິລາ ແຂວງ ຈຳປາສັກ (2019-2020).

ຈັນທະນາ ການຈະມີນ (2010). ການປັບພຶດຕິກຳຂອງນັກສຶກສາທີ່ຂາດຮຽນເລື້ອຍໆ ໃນວິຊາວິທະຍາສາດ ແລະ ເຕັກໂນໂລຊີກັບຄຸນນະພາບຊີວິດ ມະຫາວິທະຍາໄລ ຣາດຊະພັດ ສວນສຸນັນທາ.

ສຸພາບ ກາລະປຣູກ (2001). ແນວທາງການແກ້ໄຂບັນຫາການຂາດຮຽນຂອງນັກຮຽນ ນັກສຶກສາວິທະຍາໄລລຳປາງ ເທັກໂນໂລຊີ ອຳເພີເມືອງຈັງຫວັດລຳປາງ. ການຄົ້ນຄວ້າແບບອິດສະຫຼະສຶກສາສາດມະຫາບັນດິດ ສາຂາວິຊາອາຊີວະສຶກສາບັນດິດ ມະຫາວິທະຍາໄລຊຽງໃໝ່

ເຊີດສັກ ໃຈຍາບຸດ. ວິໄຈໃນຊັ້ນຮຽນ ເລື້ອງບັນຫານັກສຶກສາໜີຮຽນ ສາຂາວິຊາ ເຄື່ອງກົນເທັກນິກລົດຍົນ ວິທະຍາໄລ ການເທັກນິກ ລຳປາງ.

ຊູຊີນ ສຸດສະຫວາດ (2018). ປັດໄຈທີ່ສົ່ງຜົນຕໍ່ພຶດຕິກຳການຂາດຮຽນ ຂອງນັກສຶກສາລະດັບປະກາດສະນິຍະບັດວິຊາຊີບຊັ້ນສູງ(ປວສ) ຊັ້ນປີທີ 2 ວິທະຍາໄລເທັກໂນໂລຊີອໍລະວິດພິດຊະຍາການ

ຊູຊີນ ສຸດສະຫວາດ (2016) ການປັບປ່ຽນພຶດຕິກຳການມາຮຽນໃນລາຍວິຊາການບັນຊີຊັ້ນສູງຂອງນັກສຶກສາ ສາຂາວິຊາການບັນຊີ ລະດັບປະກາດສະນິຍະບັດຊັ້ນສູງ ຊັ້ນປີທີ2 ຫ້ອງ2 ແລະ 12 ວິທະຍາໄລເທັກໂນໂລຊີອໍລະວິດພິດຊະຍາການ ໂດຍໃຊ້ວິທີການຮ່ວມມືກັບຜູ້ປົກຄອງ

ເຕືອນໃຈ ອາຣີໂຣດນຸກຸນ (2016). ການສຶກສາປັດໄຈທີ່ມີອິດທິພົນຕໍ່ການທີ່ບໍ່ເລືອກສຶກສາຕໍ່ສາຍວິຊາຊີບຂອງນັກຮຽນ ຊັ້ນມັດທະຍົມສຶກສາປີທີ 3.

ນົງລັກ ສິດສອນ (2014). ການສຶກສາປັດໄຈ ແລະສາເຫດ ການອອກໂຮງຮຽນກາງປີ ຂອງນັກຮຽນຕາມຄວາມຄິດເຫັນຂອງຜູ້ບໍລິຫານໃນສະຖານການສຶກສາ ສັງກັດສຳນັກງານເຂດພື້ນທີ່ ການສຶກສາ ປະຖົມສຶກສາ ຈັນທະບູຣີ.

ໜຶດຍະດາ ຊູວະໜິດຊານົນ (2019). ການສຶກສາສະພາບບັນຫາ ແລະ ແນວທາງແກ້ໄຂ ການອອກໂຮງຮຽນກາງປີ ຂອງນັກສຶກສາວິທະຍາໄລ ອາຊີວະສຶກສາ ຊົນບູຣີ ຈັງຫວັດຊົນບູຣີ.

ຣຽນະພາ ຖົມມາ (2012). ການສຶກສາພຶດຕິກຳການຂາດຮຽນໃນລາຍວິຊາການບັນຊີເບື້ອງຕົ້ນ 2 ຫ້ອງCD 102 ວິທະຍາໄລເທັກໂນໂລຊີພາຍັບ ແລະ ບໍລິຫານທຸລະກິດ.

ບັງອອນ ສະຫງ່າວົງ (2006). ການສຶກສາ ສາເຫດ ແລະ ແນວທາງແກ້ໄຂບັນຫາການຂາດຮຽນຂອງ ນັກສຶກສາ ໂຮງຮຽນ ເທັກໂນໂລຊີສະຫຍາມ.

ສຸຣິຍຸພົນ ສຸທານະພັກຈະນາ (2019). ສາເຫດການຂາດຮຽນຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 6 ແລະແນວທາງການແກ້ໄຂ ໃນປີການສຶກສາ 2016 ໃນໂຮງຮຽນສາທິດຂອງມະຫາວິທະຍາໄລຂອງລັດ

ປະເນດໝາຍໝັ້ນ. 2552. ຫຼັກສູດການເຂົ້າຊັ້ນ_ຮຽນໃຫ້ກົງຕໍ່ເວລາໃນວິຊາ ການຄົ້ນຄວ້າເອັບພາກຮຽນທີ 1/2552 ຂອງນັກສຶກສາ ຊັ້ນ 3 ຫຼັກສູດ ຄອມພິວເຕີ ສູນທອນພານ ມະຫາວິທະຍາໄລ ພັດທະນະດຸດີ.

ຈະຣຸວັດ ພຽນໄຊ (1998). ການສຶກສາອີງປະກອບທີ່ເປັນສາເຫດການໜີຮຽນຂອງນັກຮຽນ ລະດັບມັດທະຍົມສຶກສາ ຕອນຕົ້ນ ໂຮງຮຽນ ນະວະມິນທຣາຣາດ ກຸງເທບມະຫານະຄອນ ປີການສຶກສາ 1997.

ທັດສະນີ ເຈນຈິຣະ. (1998). ປັດໄຈທີ່ກ່ຽວກັບການຂາດຮຽນຂອງນັກຮຽນຊາວເຂົາເຜົ່າມົ້ງ ໂຮງຮຽນ ບ້ານນ້ຳສອດ ອຳເພີທົ່ງຊ້າງ, ຈັງຫວັດນ່ານ.

ປຣະສິດ ສຸວັນມິດສະະ. (2007). ການປະເມີນໂຄງການ ການແກ້ໄຂບັນຫາການຂາດຮຽນ, ອອກກາງປີ ເພາະອ່ານໜັງສືບໍ່ໄດ້ ຂອງນັກຮຽນຊັ້ນມັດທະຖົມສຶກສາປີທີ1 ໂຮງຮຽນດ່ານໜາກຂາມເຕ້ຍ ວິທະຍາຄົມ.

Kearney, C. A. (2008). School absenteeism and school refusal behavior in youth: a contemporary review. Clinical Psychology Review, 28(3), 451-471.

Abdul, Q., Nauman, A. A., & Majida, K. (2017). Factors causing absenteeism among the students of secondary level schools. JPUHS, 30(1).

Abdullah, S. (2020). Causes of absenteeism and academic performance of low performing students of Esperanza National High School. Journal of American Academic Research, 8(1), 1-11.

Sahin, S., Arseven, Z., & Kılıç, A. (2016). Causes of student absenteeism and school dropouts. InternationaJournal of Instruction, 9(1), 195-210.

Conel, E. (2022). Factors affecting absenteeism among junior high school students in a public school. International Journal of Studies in Education and Science (IJSES), 3(2), 105-118.

Cepada, C. M., & Grepon G. S. (2020). Absenteeism and parental involvement in home and school among middle school students of public school in Northern Mindanao, Philippines: Basis for Intervention. Asian Journal of Educational Research, 8(2), 17-37. https://doi.org/10.5281/zenodo.4459797

Davis, J.S. (1953): Social class Factors and school attendance educational Review XXIII, 175- 185.

Demir, K., & Akman-Karabeyoglu, Y. (2015). Factors associated with absenteeism in high schools. Eurasian Journal of Educational Research, 62, 37-56 http://dx.doi.org/10.14689/ejer.2016.62.4

Douglas, J.W.D. & Ross, J.M. (1965): The effect of absence of secondary school performance. The British Journal of Educational

In book: Encyclopedia of of Personality and Individual DifferencesPublisher: SpringerEditors: V. Zeigler-Hill & T. Shackelford

Senyametor, F., Gyimah, E. K., & Minadzi, V. M. (2018). Factors Affecting Pupils' Absenteeism at Felicormfort Junior High School (JHS) in Cape Coast, Ghana. Journal of Education and Learning, 7(6), 138–149. https://doi.org/10.5539/jel.v7n6p138

Shahzada, G., Ghazi, S. R., Nawaz, H., & Khan, A. (2011). Causes of absenteeism from the schools at secondary level. Mediterranean Journal of Social Sciences, 2(2), 291-298.

Komakech, R. A., & Osuu, J. R. (2014). Students' Absenteeism: A Silent Killer of Universal Seconday Education

(Use) in Uganda. International Journal of Education Research, 2/10, 418-436

Yamane, Taro.1967. Statistics, An Introductory Analysis,2nd Ed., New York : Harper and Row

Kankamon, C. (2010). Behavior modification of students who are absent frequently. Science and Technology And the quality of life. Research report, Suan Sunandha Rajabhat University.

Pinsaimun, N. (2012). A study of absenteeism in language laboratories at Sripatum University. Sripathum University research grant project Faculty of Liberal Arts.

Wadesango N. and Machingambi S. 2011, Causes and Structural Effects of Student Absenteeism: A Case Study of Three South African Universities J. Soc. Sci., 26(2): 89-97.

http://digitalcommons. providence.edu/ socialwrk_ students/18. The Contributing Factors to Student Absenteeism/Truancy and the Effectiveness of Social Services and Interventions. Social Work Student Papers. Paper 18. 2008.

Mervilde, J. (1981). Student Absenteeism: Causes, Effects, and Possible Solutions. Thesis for the University of Indiana at South Bend, USA.